ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

# ການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດ ຄັ້ງທີ 3 ປີ 2005.

# ຄູ່ມື ນັກກວດກາ

ຄະນະຊີ້ນຳສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດ.

ຫ້ອງການກອງເລຂາ

ນະຄອນຫລວງວຽງຈັນ,ຕຸລາ 2004

ບົດນຳ

ປະຕິບັດຕາມຂໍ້ຕົກລົງຂອງນາຍົກລັດຖະມົນຕີເລກທີ 66/ນຍລົງວັນທີ 21 / 10 / 2003, ວ່າດ້ວຍການສຳຫລວດພົນລະເມືອງທົ່ວປະເທດຄັ້ງທີ 3 ປີ 2005. ເພື່ອເກັບກຳຂໍ້ມູນທີ່ກ່ຽວກັບພົນລະເມືອງ ແລະ ທີ່ຢູ່ອາໃສ່ໃນ ສ.ປ.ປ.ລາວ.

- ອີງຕາມຜົນໄດ້ຮັບເບື້ອງຕົ້ນຈາກການຂຶ້ນບັນຊີຄົວເຮືອນໃນເດືອນ 8 ປີ 2004, ເພື່ອເປັນຂໍ້ມູນໃຫ້ແກ່ການກະກຽມສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດປີ 2005.ຂໍ້ມູນດັ່ງກ່າວປະກອບມີຈຳນວນເຂດສຳຫລວດປະມານ 16.000 ເຂດ, ຈຳນວນນັກເດີນສຳຫລວດ 16.000 ຄົນ ແລະຈຳນວນນັກກວດກາປະມານ 1.600 ຄົນ. ນັກກວກກາມີໜ້າທີ່ກວດກາທຸກສະພາບການເຄື່ອນໄຫວຂອງການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສໃນຄັ້ງນີ້. ພ້ອມກັນນັ້ນ, ນັກກວດກາແມ່ນມີບົດບາດສຳຄັນໃນການຈັດຕັ້ງຄວບຄຸມ ແລະກວດການັກເດີນສຳຫລວດໃນການປະຕິບັດການເດີນສຳຫລວດ. ນັກກວດກາມີໜ້າທີ່ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນໄລຍະການເດີນສຳຫລວດ, ພ້ອມທັງສັງເກດການປະຕິບັດງານຂອງນັກເດີນສຳຫລວດທັງໝົດທີ່ນອນຢູ່ໃນເຂດຕົນເອງຮັບຜິດຊອບ. ນອກຈາກນັ້ນແລ້ວນັກກວດກາຍັງເປັນຜູ້ປະສານງານລະຫວ່າງ ການປະຕິບັດງານພາກສະໜາມກັບຄະນະຊີ້ນຳການສຳຫລວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດອີກດ້ວຍ.

ເພື່ອເຮັດໃຫ້ນັກກວດກາປະຕິບັດໜ້າທີ່ວຽກງານຂອງຕົນໄດ້ດີ, ຫ້ອງການກອງເລຂາຄະນະຊີ້ນຳສຳຫລວດພົນລະເມືອງຈຶ່ງໄດ້ຮຽບຮຽງ “ ຄູ່ມືນັກກວດກາ “ ຊຶ່ງມີບັນດາເນື້ອໃນຂັ້ນຕອນຕ່າງໆຂອງການກວດກາເຊິ່ງຈະເປັນປະໂຫຍດໃຫ້ແກ່ທ່ານຢ່າງຫລວງຫລາຍໃນເວລາປະຕິບັດການກວດກາ.

ຄະນະຊີ້ນຳສຳຫລວດພົນລະເມືອງ ແລະ ທີ່ຢູອາໃສ
ທົ່ວປະເທດຄັ້ງທີ 3 ປີ 2005.
ຫ້ອງການກອງເລຂາ.

# ສາລະບານ


| | ໜ້າ |
|---|---|
| 1. ເປີດຫົວເລື້ອງ. | 4 |
| 1.1 ການກວດກາ. | 4 |
| 1.2 ບົດບາດຂອງນັກກວດກາ. | 4 |
| 2. ການເຄື່ອນໄຫວກ່ອນ ແລະ ໃນໄລຍະການເດີນສຳຫລວດ. | 5 |
| 2.1 ການຝຶກອົບຮົມນັກກວດກາ. | 5 |
| 2.1.1 ການຂົນສົ່ງພົບຄວາມຫຍຸ້ງຍາກ. | 6 |
| 2.2 ການເຄື່ອນໄຫວກ່ອນການເດີນສຳຫລວດ. | 6 |
| 2.3 ການເຄື່ອນໄຫວໃນໄລຍະການເດີນສຳຫລວດ. | 7 |
| 3. ການກວດກາຄຸນນະພາບ. | 10 |
| 3.1 ຈຸດປະສົງຂອງການ ກວດກາຄຸນະພາບ | 10 |
| 3.2 ການກວດກາຄຸນນະພາບຂອງການສຳພາດ | 11 |
| 3.3 ການກວດກາຄຸນນະພາບ ແບບສອບຖາມ | 13 |
| 3.4 ການກວດກາຄຸນນະພາບຫລັງການເດີນສຳຫລວດ | 14 |
| 3.5 ການກວດຄືນຢ່າງລະອຽດ ສຳລັບເຂດສຳຫລວດ ທີ່ຈຳນວນລວມບໍ່ກົງກັນ. | 16 |
| 4. ການເຄື່ອນໄຫວຫລັງການເດີນສຳຫລວດ | 17 |
| 4.3 ຫຼັງການເດີນສຳຫລວດ | 17 |
| 4.2 ການສົ່ງມອບເອກະສານ | 18 |

# ຄູ່ມືນັກກວດກາ

## 1.ເປີດຫົວເລື່ອງ:

ຈຸດປະສົງຂອງການແກ້ໄຂໃບແບບສອບຖາມຂອງການສຳຫລວດແມ່ນເພື່ອຮັບຮອງວ່າທຸກໆໃບແບບສອບຖາມ ທີ່ຜ່ານການສຳຫລວດແມ່ນໄດ້ຈົດກ່າຍຄຳຕອບຖືກຕ້ອງຕາມການແນະນຳ. ໜ້າທີ່ດັ່ງກ່າວຕ້ອງດຳເນີນຢູ່ຂັ້ນເມືອງ ເພື່ອຄວາມສະດວກໃນການກັບຄືນໄປສູ່ເຂດສຳຫລວດໃນທຸກກໍລະນີທີ່ຈຳເປັນຈະດັດແກ້. ຄວນຈຳໄວ້ວ່າ ໄລຍະການເດີນສຳຫລວດຕົວຈິງນັກກວດກາແຕ່ລະເຂດຈະໄດ້ກວດກາບາງໃບແບບສອບ ຖາມ ສະນັ້ນນັກເດີນສຳຫລວດຄວນເອົາໃຈໃສ່ ເພື່ອຫລີກລ້ຽງການກັບໄປເຮັດຄືນຮອບສອງ.

ໜ້າທີ່ຂອງການກວດກາໃບແບບສອບຖາມທັງໝົດຕ້ອງໄດ້ຮັບການປະຕິບັດເພື່ອຄວາມຄົບຖ້ວນ, ຊັດເຈນ ແລະ ໜ້າເຊື່ອຖືໄດ້.

ການກວດແກ້ແມ່ນຂະບວນການກວດກາໃບແບບສອບຖາມທັງໝົດ ແລະ ດັດແກ້ຄຳຜິດຊຶ່ງເກີດຂຶ້ນໃນໄລຍະການເດີນສຳຫລວດ. ໃນເວລາດຽວກັນມັນອາດຈຳເປັນຕ້ອງກັບຄືນຫາເຂດເດີນສຳຫລວດເພື່ອດັດແປງຄຳຜິດ ດັ່ງນັ້ນ,ມັນແມ່ນຄວາມສຳຄັນທີ່ໃບແບບສອບຖາມທັງໝົດຕ້ອງຖືກກວດກາໃນເວລາຢູ່ຂັ້ນເມືອງ ເພາະວ່າໃກ້ເຂດສຳຫລວດກວ່າໝູ່,ທຸກໆຄວາມຜິດພາດທີ່ພົບເຫັນຕາມຫຼັງ ອາດເປັນການຫຍຸ້ງຍາກໃນການດັດແກ້ໃຫ້ຖືກຕ້ອງ, ໂດຍສະເພາະຫຼັງຈາກບັນດາໃບແບບສອບຖາມໄດ້ສົ່ງເຖິງສູນສະຖິຕິແຫ່ງຊາດທີ່ນະຄອນຫລວງວຽງຈັນ.

ໄລຍະເດີນສຳຫລວດໃນທົ່ວປະເທດ ໄດ້ແບ່ງອອກເປັນປະມານ 16.000 ເຂດເດີນສຳຫລວດ, ຂະໜາດສະເລ່ຍຂອງເຂດສຳຫລວດ ໄດ້ຄາດຄະເນປະມານ 50-70 ຄົວເຮືອນຕໍ່ໜຶ່ງເຂດ, ຂະໜາດສະເລ່ຍຂອງຄົວເຮືອນໄດ້ຄາດຄະເນປະມານເກືອບ 6 ຄົນ ຕໍ່ 1 ຄົວເຮືອນ, ມື້ໜຶ່ງ ນັກເດີນສຳຫລວດສາມາດ ສຳພາດໄດ້ປະມານ 8 - 10 ຄົວເຮືອນ

ແບບສອບຖາມການສຳຫລວດແມ່ນແບບສອບຖາມສຳລັບຄົວເຮືອນໜຶ່ງໆ ບັນດາໃບແບບສອບຖາມ ໂຮມເຂົ້າກັນເປັນປື້ມແບບສອບຖາມ, ຊຶ່ງແຕ່ລະປື້ມແບບສອບຖາມ ມີ 37 ໃບແບບສອບຖາມ. ຈຳນວນປື້ມແບບສອບຖາມຕໍ່ແຕ່ລະເຂດເດີນສຳຫລວດ ແມ່ນບົນພື້ນຖານຈາກຈຳນວນຄົວເຮືອນ ອີງຕາມການຂຶ້ນບັນຊີຄົວເຮືອນຈຶ່ງໄດ້ແບ່ງເປັນ 37 ໃບ, ຊຶ່ງສະຫລຸບໄດ້ວ່າໃບແບບສອບຖາມໜຶ່ງໂດຍສະເລັ່ຍແມ່ນພຽງພໍສຳລັບໜຶ່ງຄົວເຮືອນຄວາມຕ້ອງການສະເລ່ຍຄາດຄະເນປະມານ 2,3 ປື້ມແບບສອບຖາມຕໍ່ໜຶ່ງເຂດສຳ ຫລວດ, ຕ້ອງຈຳໄວ້ວ່າ ປື້ມແບບ ສອບຖາມທີ່ໄດ້ໃຊ້ ແລະ ບໍ່ໄດ້ໃຊ້ຕ້ອງເກັບຄືນໝົດ ແລະ ສົ່ງໃຫ້ກອງເລຂາ ( ສູນສະຖິຕິແຫ່ງຊາດ ) ທີ່ນະ ຄອນ ຫຼວງວຽງຈັນ.

ນັກເດີນສຳຫລວດໄດ້ຈົດກ່າຍເຂົ້າໃນແບບສອບຖາມໂດຍບິກສີຟ້າ,ທຸກການປ່ຽນແປງຂອງນັກກວດກາໃນໄລຍະເດີນສຳຫລວດກໍ່ເປັນບິກສີຟ້າເໝືອນກັນ. ດັ່ງນັ້ນ,ທຸກການດັດແກ້ຂອງກອງເລຂາເມືອງ, ແຂວງໃຫ້ໃຊ້ບິກສີດຳ, ສ່ວນບິກສີແດງແມ່ນ(ສສຊ) ຈະເປັນຜູ້ໃຊ້. ມັນມີຄວາມສຳຄັນທີ່ກອງເລຂາ (ສູນສະຖິຕິແຫ່ງຊາດ) ຈະຈຳແນກໄດ້ລະຫ່ວາງວຽກຂອງທ່ານ ແລະ ວຽກຂອງນັກເດີນສຳຫລວດ / ກວດກາ.

ເວລາດັດແກ້ຄຳຜິດ ໃຫ້ຂ້າບ່ອນທີ່ມີຄຳຜິດ ແລ້ວຈົດກ່າຍຄຳຖືກໃສ່. ຂີດເປັນເສັ້ນຂວາງສອງເສັ້ນ ໃສ່ບ່ອນທີ່ຜິດ ແລະ ຂຽນຄຳທີ່ຖືກໃສ່ເທິງບໍ່ໃຫ້ລືບຄຳຜິດທີ່ໄດ້ຈົດກ່າຍມາກ່ອນແລ້ວ,ສ່ວນຢູ່ໃນຮູບກະໂລແມ່ນໃຫ້

ໝາຍຂີດຂ້າຈິນດຳໝົດ. ບາງຄັ້ງຄາວທ່ານຮູ້ວ່າມັນເປັນຄຳຜິດແຕ່ທ່ານບໍ່ຮູ້ຄຳຕອບທີ່ຖືກຕ້ອງ, ເພາະສະນັ້ນທ່ານໝາຍ ( 9 ) ສຳລັບບໍ່ຮູ້. ການນຳໃຊ້ລະຫັດ ( 9 ) ນີ້ຄວນຂື້ນກັບຈຳນວນລະຫັດທີ່ໄດ້ກຳນົດໄວ້ ໃນແບບສອບຖາມ, ຄວນເນັ້ນໜັກວ່າທ່ານສາມາດໃຊ້ລະຫັດ ( 9 ) ເປັນແຫ່ລ່ງຂໍ້ມູນສຸດທ້າຍ ຖ້າມີເລກລະ ຫັດ ( 9 ) ຫຼາຍໂພດຜົນຂອງການສຳຫລວດຜົນລະເມືອງ ຈະບໍ່ເປັນປະໂຫຍດ.

ການສຳຫລວດຄັ້ງນີ້ແມ່ນໄດ້ກຳນົດໃຫ້ໝາຍ (X) ເປັນສ່ວນຫລາຍເພື່ອຫລີກລ່ຽງການຂີດຂຽນທີ່ຜິດພາດ. ບາງຄັ້ງຄາວທ່ານຄວນຈະຫາວິທີທາງແກ້ໄຂຢ່າງຖືກຕ້ອງດ້ວຍຕົນເອງ ແລະ ບາງກໍລະນີຕ້ອງປຶກສາຫາລືກັບນັກກວດກາອື່ນ.

**ພາກ ໑ : ສຳລັບທຸກຄົນທີ່ມີອາຍຸ 10 ປີ ຂື້ນໄປ.**

ສຳລັບບັນດາຄົນທີ່ມີອາຍຸຕ່ຳກວ່າ 10 ປີ ຂື້ນໄປ, ສຳລັບຜູ້ມີອາຍຸແຕ່ : 0 ປີ ຫາ 9 ປີ ໃນຄຳຖາມທີ 4, ບັນດາຄຳຖາມໃນ ພາກ ນີ້ຕ້ອງຈີດກ່າຍດ້ວຍເຄື່ອງໝາຍ (X) , ໝາຍຄວາມວ່າ ສະມາຊິກໃນຄົວເຮືອນທີ່ມີອາຍຸຕ່ຳກວ່າ 10 ປີຈະບໍ່ຖືກສຳພາດໃນບັນດາຄຳຖາມເຫຼົ່ານີ້. ບັນດາຄຳຖາມໃນພາກນີ້ມັນມີການພົວພັນກັນຢ່າງຊະນິດແໜ້ນ, ມັນຄວນຈະຖືກປະຕິດບັດການກວດກາໃນໄລຍະເວລາດຽວກັນເພື່ອດັດແກ້.

ຄຳຖາມ ທີ 15 : ກິດຈະກຳຕົ້ນຕໍໃນ 12 ເດືອນ ຜ່ານມາຂອງ ທ່ານ ແມ່ນຫັຍງ.

ທຸກຄົນທີ່ມີອາຍຸ 10 ປີ ຂື້ນໄປຕ້ອງມີຄຳຕອບລະຫັດໜຶ່ງ ໃນບັນດາລະຫັດດັ່ງລຸ່ມນີ້: 01=ຜູ້ອອກແຮງງານໃຫ້ລັດ, 02 =ຜູ້ອອກແຮງງານໃຫ້ລັດວິສາຫະກິດ, 03 =ຜູ້ອອກແຮງງານໃຫ້ລັດ-ເອກະຊົນ, 04= ຜູ້ອອກແຮງງານໃຫ້ເອກະຊົນ, 05 =ຜູ້ໃຊ້ແຮງງານ( ນາຍຈ້າງ ), 06 = ເຮັດວຽກໃຫ້ຕົນເອງ,07 =ເຮັດວຽກໃຫ້ຄອບຄົວ (ບໍ່ໄດ້ຄ່າຈ້າງ ), 08= ກຳລັງຊອກວຽກເຮັດ / ຫວ່າງງານ, 09 = ນັກຮຽນ, 10 = ພໍ່ ເຮືອນ / ແມ່ເຮືອນ, 11= ເບັ້ຍບຳນານ / ເຈັບປ່ວຍ / ແກ່ສາລາ, 12= ອື່ນໆ.

ກວດເບິ່ງວ່າລະຫັດ ດັ່ງກ່າວນັ້ນສອດຄ່ອງກັບແຫຼ່ງຂໍ້ມູນອື່ນ ໃນໃບແບບສອບຖາມ. ຖ້າຈົດຂ້າມສຳລັບໜຶ່ງ ຫຼື ຫຼາຍຄົນໃນຄົວເຮືອນທີ່ມີອາຍຸ 10 ປີຂື້ນໄປໃຫ້ພະຍາຍາມຊອກຄຳ ຕອບທີ່ຖືກຕ້ອງຈາກແຫຼ່ງຂໍ້ມູນອື່ນໃນໃບແບບ ສອບຖາມ.

ຄຳຖາມ ທີ 16 : ອາຊີບຕົ້ນຕໍໃນ 12 ເດືອນຜ່ານມາຂອງ ທ່ານ ແມ່ນຫັຍງ.

ຄຳຖາມນີ້ໃຊ້ສະເພາະບຸກຄົນ ທີ່ມີຄຳຕອບໃນລະຫັດແຕ່ 01 - 07 ໃນຄຳຖາມທີ 15 ເຊັ່ນ : ຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ ລັດວິສາຫະກິດ, ຜູ້ອອກແຮງງານໃຫ້ລັດ - ເອກະຊົນ, ຜູ້ອອກແຮງງານໃຫ້ເອກະ ຊົນ, ຜູ້ໃຊ້ແຮງງານ(ນາຍຈ້າງ), ເຮັດວຽກໃຫ້ຕົນເອງ, ເຮັດວຽກໃຫ້ຄອບຄົວ (ບໍ່ໄດ້ ຄ່າຈ້າງ ).

ຈຳໄວ້ວ່າອາຊີບຕົ້ນຕໍຄວນຈະຂຽນເປັນຄຳເວົ້າ ແລະ ໃຫ້ຈະແຈ້ງ. ໃນກໍລະນີບໍ່ມີຄຳຕອບໃຫ້ພະຍາຍາມຊອກຄຳຕອບທີ່ຖືກຕ້ອງ ຈາກແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ. ອາຊີບຕົ້ນຕໍຂອງຜູ້ຖືກສຳພາດຕ້ອງສອດຄ່ອງກັບ ອາຍຸໃນຄຳຖາມທີ 4 ແລະ ລະດັບການສຶກສາສູງສຸດໃນຄຳຖາມທີ 13 ເຊັ່ນດຽວກັນ.

ຄຳຖາມ ທີ 17 : ຂະແໜງເສດຖະກິດຕົ້ນຕໍໃນ 12 ເດືອນຜ່ານມາຂອງທ່ານແມ່ນຂະແໜງທັຍງ.

ຄຳຖາມນີ້ໃຊ້ສະເພາະບຸກຄົນ ທີ່ມີຄຳຕອບໃນລະຫັດແຕ່ 01 - 07 ໃນຄຳຖາມທີ 15 ເຊັ່ນ : ຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ລັດວິສາຫະກິດ, ຜູ້ອອກແຮງງານໃຫ້ລັດ - ເອກະຊົນ, ຜູ້ອອກແຮງງານໃຫ້ເອກະຊົນ, ຜູ້ໃຊ້ແຮງງານ (ນາຍຈ້າງ), ເຮັດວຽກໃຫ້ຕົນເອງ, ເຮັດວຽກໃຫ້ຄອບຄົວ (ບໍ່ໄດ້ຄ່າຈ້າງ ).

ຈຳໄວ້ວ່າຂະແໜງເສດຖະກິດຕ້ອງຂຽນເປັນຄຳເວົ້າ,ຊຶ່ງເປັນຄຳຕອບທີ່ກ່ຽວກັບວຽກຕົ້ນຕໍທີ່ເຄີຍໄດ້ເຮັດຜ່ານມາແລ້ວ ໃຫ້ຂຽນໃສ່ຊ່ອງນີ້. ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຄຳຕອບທີ່ຖືກຕ້ອງຈາກແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ. ຄຳຕອບໃນຂະແໜ່ງເສດຖະກິດຕົ້ນຕໍຕ້ອງສອດຄ່ອງກັບອາຊີບ ໃນຄຳຖາມທີ່ 16.

**ພາກ ຈ : ສຳລັບແມ່ຍິງທີ່ມີອາຍຸ 15 - 49 ປີ.**

ພາກນີ້ຄວນໄດ້ຄຳຕອບສະເພາະແມ່ຍິງ ທີ່ມີອາຍຸ 15 - 49 ປີ. ສຳລັບຜູ້ຊາຍແມ່ນບໍ່ໄດ້ຖາມ ແລະ ແມ່ຍິງທຸກຄົນທີ່ມີອາຍຸຕ່ຳກວ່າ 15 ປີ ແລະ ສູງກ່ວາ 49 ປີ ໃນພາກນີ້ເຊັ່ນ : ຄຳຖາມທີ 18 , 19 ແລະ 20.

ຄຳຖາມທີ 18 : ທ່ານເຄີຍເກີດລູກມີຊີວິດບໍ່.

ຄຳຕອບຕໍ່ຄຳຖາມນີ້ຕ້ອງໝາຍ ( x ) ໃສ່ຫ້ອງສີ່ລ່ຽມ ຂອງຄຳຖາມທີ 18, ສຳລັບແມ່ຍິງທຸກຄົນທີ່ມີອາຍຸ 15 - 49 ປີ. ຖ້າບໍ່ເຫັນໝາຍກໍ່ຕ້ອງຊອກຫາຂໍ້ມູນໃສ່ບອ່ນທີ່ບໍ່ໄດ້ໝາຍໃນຊ່ອງນີ້. ຖ້າຊ່ອງໃດຊ່ອງໜຶ່ງຂອງຄຳຖາມທີ 18 ແລະ 19 ໄດ້ໝາຍ (x) ຕົວຢ່າງ : 1 ເທົ່າກັບ(ເຄີຍ), 2 ບໍ່ເຄີຍ, 9 ບໍ່ມີຄຳຕອບ.

ຄຳຖາມ ທີ 19 : ເວລາທ່ານເກີດລູກຄົນທຳອິດ ອາຍຸຂອງທ່ານໄດ້ຈັກປີ.

ອາຍຸທີ່ນີ້ ໝາຍເຖີງອາຍຸເຕັມທີ່ຄິດໄລ່ຮອດວັນເກີດເທື່ອສຸດທ້າຍໃນເວລາເກີດລູກຄົນທຳອິດ ຕົວຢ່າງ : ນ. ໄມ, ເກີດວັນທີ 20 ເດືອນ 12 ປີ 1970 ແລະ ນ. ໄມ ໄດ້ເກີດລູກຄົນທຳອິດໃນວັນທີ 15 ເດືອນ 9 ປີ 1991, ສະນັ້ນ ອາຍຸຂອງ ນ.ໄມ ທີ່ເກີດລູກຄົນທຳອິດຈະແມ່ນ 20 ປີ (ເພາະການຄິດໄລ່ແມ່ນແຕ່ວັນທີ 20 ເດືອນ12 ປີ1970 ຫາ ວັນທີ 20 ເດືອນ 12 ປີ 1990). ຄຳຕອບໃນຄຳຖາມນີ້ຕ້ອງແມ່ນປີເຕັມດັ່ງນີ້: ອາຍຸຕົວຈິງແຕ່ 15 - 49 ປີ.

ກວດກາເບິ່ງວ່າອາຍຸສອດຄ່ອງກັບແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຄຳຕອບທີ່ຖືກຕ້ອງຈາກແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ. ຕ້ອງແນ່ໃຈວ່າຄຳຕອບທີ່ໃຊ້ສຳລັບທັງສອງຄຳຖາມໃນພາກນີ້ຕ້ອງສອດຄ່ອງກັບຄຳຕອບໃນຄຳຖາມທີ 2 ແລະ ທີ 4. ຕົວຢ່າງ: ຈຳນວນລູກເກີດມີຊີວິດຕ້ອງສອດຄ່ອງກັບອາຍຸປະຈຸບັນ ແລະ ອາຍຸຂອງແມ່ຍິງທີ່ເກີດລູກຜູ້ທຳອິດທີ່ມີຊີວິດ.

ຄຳຖາມ ທີ 20 : ຈຳນວນເດັກເກີດໃໝ່ໃນ 12 ເດືອນຜ່ານມາ .

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ.ຫມາຍຄວາມວ່າໃຫ້ຈົດ

ກ່າຍຈຳນວນທີ່ເກີດໃຫມ່ຫມາຍວ່າເດັກນ້ອຍອາຍຸຕ່ຳກ່ວາຫນຶ່ງປີລົງມາໃນນັ້ນແຍກ ຍິງ, ຊາຍ ຕາມລຳດັບ.

ສ : ພາກ ການຕາຍໃນຄົວເຮືອນ.

ຄຳຖາມທີ 21 : ໃນ 12 ເດືອນ ຜ່ານມາຄົວເຮືອນນີ້ມີຄົນຕາຍບໍ່.

ຖ້າຄຳຕອບແມ່ນ ( ມີ ) ຊຶ່ງເປັນລະຫັດ (1). ຢ່າງໜ້ອຍຕ້ອງມີຄຳຕອບໃນຊ້ອງລຸ່ມສຳລັບເພດ ແລະ ອາຍຸຂອງຜູ້ຕາຍ.

ຖ້າຄຳຕອບແມ່ນ ( ບໍ່ມີ ) ຊຶ່ງເປັນລະຫັດ ( 2 ) ໃຫ້ຂ້າມໄປຫາຄຳຕອບທີ 21 ໃນພາກ ຊ:

ຈຳໄວ້ວ່າອາຍຸຄວນຈະໄດ້ຄຳຕອບເປັນປີເຕັມ, ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບທີ່ຖືກຕ້ອງຈາກແຫ່ລງຂໍ້ມູນອື່ນໃນໃບແບບສອບຖາມ. ຈົ່ງສັງເກດຖ້າມີຄົນຕາຍຫຼາຍກ່ວາ 5 ຄົນໃນຄົວເຮືອນຕ້ອງໃຊ້ແບບສອບຖາມໃບຕໍ່ໄປ.

**ພາກ ຊ: ໃນ 12 ເດືອນຜ່ານມາ ໃນຄົວເຮືອນນີ້ມີຄົນຍົກຍ້າຍໄປ.ໂຍກຍ້າຍມາບໍ່.**

ຄຳຖາມທີ 22: ໃນ 12 ເດືອນຜ່ານມາໃນຄົວເຮືອນນີ້ມີຄົນຍົກຍ້າຍເຂົ້າມາບໍ່.

ກວດເບິ່ງຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນບໍ່ໃນໃບສອບຖາມ, ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບ ທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

ຕົວຢ່າງ: ຖ້າມີການຍົກຍ້າຍເຂົ້າມາໃຫ້ໝາຍ ( x) ໃສ່ 1ມີ , 2ບໍ່ມີ. ແລະ ໃຫ້ໝາຍ ( x) ໃສ່ເລກລະຫັດທີ່ຍ້າຍມາຈາກ: 1 =ພາຍໃນແຂວງ, 2 =ຕ່າງແຂວງ, 3 =ນະຄອນຫລວງວຽງຈັນ, 4 =ຕ່າງປະເທດ.

ຄຳຖາມທີ 23: ໃນ 12 ເດືອນຜ່ານມາ ໃນຄົວເຮືອນນີ້ມີຄົນຍົກຍ້າຍອອກໄປບໍ່.

ກວດເບິ່ງຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນບໍ່ໃນໃບສອບຖາມ, ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບ ທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

ຕົວຢ່າງ: ຖ້າມີການຍົກຍ້າຍອອກໄປ,ໃຫ້ໝາຍ ( x) ໃສ່ 1ມີ , 2ບໍ່ມີ ແລະ ໃຫ້ໝາຍ ( x) ໃສ່ເລກລະຫັດຍົກຍ້າຍອອກໄປ 1=ພາຍໃນແຂວງ, 2=ຕ່າງແຂວງ, 3=ນະຄອນຫລວງວຽງຈັນ, 4=ຕ່າງປະ ເທດ

**ພາກ ຍ:** ຈຳນວນຄົນພິການໃນຄົວເຮືອນ.

ຄຳຖາມທີ 24 : ຄົວເຮືອນນີ້ມີຄົນພິການໃດນຶ່ງບໍ່

ໃຫ້ສັງເກດ ຖ້າມີຄົນໃດຄົນໜຶ່ງພິການໃນຄົວເຮືອນແມ່ນຈົດເລກລະຫັດສະມາຊິກ ແລະ ລະຫັດຄວາມພິການ, ສາຍເຫດຂອງການພິການ.

**ພາກ ດ** : ຄຸນລັກສະນະຂອງຄົວເຮືອນ.

ພາກ ດ ຄວນຖືກຈົດກ່າຍໃສ່ແບບສອບຖາມສຸດທ້າຍ (ຫຼັງຈາກຈົດກ່າຍສະມາຊິກສຸດທ້າຍຂອງຄົວເຮືອນ). ໃນກໍລະນີມີໃບແບບສອບຖາມຫຼາຍກ່ວາໜຶ່ງໃບສຳລັບຄົວເຮືອນໜຶ່ງເຊັ່ນ: ເວລາຄົວເຮືອນມີສະມາ

ຊິກຫຼາຍກວ່າ 10 ຄົນ. ຖ້າພາກນີ້ມີຄຳຕອບໃນໃບແບບສອບຖາມອື່ນໆ ຕົວຢ່າງ: ໃນໃບທຳອິດ, ທ່ານ ຕ້ອງຂ້າຖິ້ມດ້ວຍເຄື່ອງໝາຍ (x) ແລະ ໃຫ້ຈົດກ່າຍຄຳຕອບໃສ່ໃບແບບສອບຖາມສຸດທ້າຍຂອງຄົວເຮືອນ.

ຄຳຖາມທີ 25 : ຖານະອາໃສຢູ່ເຮືອນຫຼັງນີ້ ຄືແນວໃດ.

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບທີ່ຖືກຕ້ອງຈາກແຫ່ລງຂໍ້ມູນອື່ນໃນໃບແບບສອບຖາມ.

ຄຳຖາມ 25, 26, 27, 28: ເຮືອນທີ່ຄົວເຮືອນນີ້ອາໃສຢູ່ແມ່ນປະເພດໃດ.

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫ່ລງຂໍ້ມູນອື່ນໃນໃບແບບສອບຖາມ.ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບ. ທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

ຄຳຖາມທີ 29: ເຮືອນຫລັງນີ້ມີໄຟຟ້າໃຊ້ບໍ່

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນນອນໃນໃບສອບຖາມ. ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບທີ່ຖືກຕ້ອງຕາມແຫລ່ງຂໍ້ມູນອື່ນໃນໃບສອບຖາມ.

ຄຳຖາມທີ 30: ຂະໜາດເນື້ອທີ່ຢູ່ອາໃສຂອງຄົວເຮືອນຫລັງນີ້ມີເທົ່າໃດ.

ກວດເບິ່ງຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນໃນໃບສອບຖາມ. ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກ ຫາຄຳຕອບທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບສອບຖາມ.

ຄຳຖາມທີ 31: ການໃຊ້ນ້ຳເພື່ອດື່ມ ແລະຄົວກິນຕົ້ນຕໍໄດ້ມາຈາໃສ.

ຄວນມີຄຳຕອບ ☒ ດຽວໃນນຶ່ງຄົວເຮືອນ

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫລງຂໍ້ມູນອື່ນບໍ່ໃນໃບສອບຖາມ, ຖ້າບໍ່ມີຄຳຕອບໃຫ້ພະຍາຍາມ ຊອກ ຫາຄຳຕອບທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບສອບຖາມ.

ຄຳຖາມທີ 32: ສ້ວມຖ່າຍຕົ້ນຕໍທີ່ຄົວເຮືອນໃຊ້ແມ່ນປະເພດໃດ.

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນບໍ່ໃນໃບສອບຖາມ ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

ຄຳຖາມທີ 33: ເຊື້ອໄຟຕົ້ນຕໍທີ່ຄົວເຮືອນໃຊ້ຄົວກິນແມ່ນຫຍັງ.

ກວດເບິ່ງຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນບໍ່ໃນໃບສອບຖາມ, ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບ ທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

ຄຳຖາມທີ 34: ຄົວເຮືອນນີ້ມີດິນກະສິກຳເປັນຂອງຕົນເອງບໍ່

ກວດເບິ່ງຄຳຕອບມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນບໍ່ໃນໃບສອບຖາມ,ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຫາຄຳຕອບ ທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

**ພາກ ๓ : ຈຳນວນຄົນລວມຄົວເຮືອນ.**

ກວດເບິ່ງວ່າຈຳນວນຄົນໃນຄົວເຮືອນ: ຈຳນວນຊາຍ,ຍິງ ແລະ ຈຳນວນລວມການກວດໂດຍການນັບຈຳນວນຊາຍກ່ອນເຊັ່ນ: ທຸກໆລະຫັດ (1) ໃນຄຳຖາມ ແລະ ເຮັດແບບດຽວກັນສຳລັບຈຳນວນຍິງເຊັ່ນ: ທຸກໆລະຫັດ (2) ໃນ ຄຳຖາມທີ່ (3) ສຸດທ້າຍແມ່ນລວມຈຳນວນດັ່ງກ່າວ. ຄຳຕອບທີ່ທ່ານໄດ້ຕ້ອງເໝືອນກັນ ກັບເລກທີ່ບຸກຄົນຜູ້ສຸດທ້າຍ ຂອງຄົວເຮືອນ.ຕົວເລກໃນພາກນີ້ຕ້ອງຖືກກ່າຍໃສ່ໜ້າປົກຂອງປື້ມແບບສອບຖາມ. ຖ້າຕົວເລກໃນພາກ ๓ ນີ້ມີຄຳຜິດ ຕ້ອງໄດ້ດັດແກ້ໃຫ້ຖືກຕ້ອງທາງໃນໃບສອບຖາມ ແລະ ໜ້າປົກຂອງປື້ມແບບສອບຖາມ.

ຈຳໄວ້ວ່າຖ້າມີຈຳນວນພົນຫລາຍກວ່າ 10 ຄົນໃນຄົວເຮືອນໜຶ່ງ, ຕ້ອງໃຊ້ໃບສອບຖາມຫລາຍກວ່າໜຶ່ງໃບ. ທຸກໃບສອບຖາມຕ້ອງໝາຍ (x) ໃສ່ຫ້ອງສີ່ລ່ຽມ ດ້ານຂ້າງຂໍ້ມູນເອກະລັກ.

ກວດຄືນບ່ອນໝາຍເຫດ. ບາງຄັ້ງຄາວອາດມີແຫລ່ງຂໍ້ມູນທີ່ເປັນປະໂຫຍດສຳລັບວຽກການດັດແກ້ຂອງທ່ານ.ກ່ອນຈະສືບຕໍ່ເບິ່ງໃບແບບສອບຖາມຕໍ່ໄປ, ຄວນກວດຄືນພາກຕ່າງໆ ວ່າຖືກຕ້ອງຄົບຖ້ວນຫຼືບໍ່,

### 1.1. ການກວດກາ

ໃນການປະຕິບັດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໃສທົ່ວປະເທດຄັ້ງທີ 3 ປີ 2005 ນີ້, ບັນດາບ້ານຕ່າງໆທົ່ວປະເທດໄດ້ຖືກແບ່ງເປັນເຂດສຳຫຼວດ.ນຶ່ງບ້ານອາດຈະແບ່ງອອກເປັນ1ເຂດສຳຫລວດຫລືຫລາຍເຂດສຳຫລວດຂຶ້ນກັບຈຳນວນຂອງຄົວເຮືອນ ແລະ ຈຳນວນປະຊາກອນໃນບ້ານນັ້ນ ຊຶ່ງທາງຫ້ອງການກອງເລຂາຂັ້ນແຂວງໄດ້ກະກຽມໄວ້ແລ້ວໃນຕາຕະລາງ 01 ນັກເດີນສຳຫຼວດຜູ້ນຶ່ງຈະຕ້ອງຮັບຜິດຊອບໜຶ່ງເຂດເດີນສຳຫຼວດ ເທົ່ານັ້ນ.

*ເຂດກວດກາ* ຈະປະກອບດ້ວຍເຂດສຳຫຼວດຫລາຍເຂດລວມເຂົ້າກັນ.ນັກກວດກາຜູ້ໜຶ່ງຈະຕ້ອງຮັບຜິດຊອບກວດກາ 1 ເຂດກວດກາ ແລະຈະຕ້ອງກວດກາ ແລະ ກຳກັບນຳການເດີນສຳຫຼວດໃນເຂດກວດກາທີ່ຕົນ ຮັບຜິດຊອບ. ນັກກວດກາຜູ້ໜຶ່ງຈະຕ້ອງຮັບຜິດຊອບນັກເດີນສຳຫລວດປະມານ 7-10 ຄົນ ອີງຕາມຄວາມເໝາະສົມ.

### 1.2. ບົດບາດ ຂອງນັກກວດກາ

ນັກກວດກາຈະມີບົດບາດເປັນຜູ້ຕ່າງໜ້າໃຫ້ແກ່ກອງເລຂາຂອງຄະນະຊີ້ນຳການສຳຫຼວດພົນລະເມືອງຂັ້ນສູນກາງໃນການແນະນຳ ແລະກວດກາການປະຕິບັດວຽກງານໃນພາກສະໜາມ. ນັກກວດກາຈະແມ່ນຂົວຕໍ່ລະຫວ່າງຫ້ອງການສຳຫຼວດພົນລະເມືອງຂັ້ນຕ່າງໆ ແລະນັກເດີນສຳຫຼວດ. ວຽກງານການສຳຫຼວດພົນລະເມືອງຈະປະຕິບັດໄດ້ດີ ແລະ ຂໍ້ມູນຈະຄົບຖ້ວນຊັດເຈນ ຫຼືບໍ່ນັ້ນຂຶ້ນກັບການຕັ້ງໜ້າ ແລະ ເອົາໃຈໃສ່ປະຕິບັດການກວດກາຂອງນັກກວດກາ. ເວລາເກີດມີບັນຫາຂຶ້ນໃນເຂດສຳຫຼວດເຊັ່ນ: ຄົວເຮືອນ ຫຼືທ້ອງຖິ່ນບໍ່ໃຫ້ການຮ່ວມມື,

ນັກເດີນສຳຫຼວດບໍ່ປະຕິບັດວຽກໄປຕາມຫຼັກການການສຳຫຼວດ, ປື້ມສຳຫລວດ ຫຼືເອກະສານບໍ່ຄົບຖ້ວນເປັນຕົ້ນ ລ້ວນແຕ່ແມ່ນໜ້າທີ່ຂອງນັກກວດກາທີ່ຈະຕ້ອງລາຍງານ ແລະ ຫາທາງແກ້ໄຂໃຫ້ທັນເວລາ. ນັກກວດກາເປັນຄື ກັບຫົວໜ້າຄະນະນັກເດີນສຳຫຼວດ ແລະ ການດັດແປງຄວາມຜິດພາດ, ການແກ້ໄຂບັນຫາທາງດ້ານເຕັກນິກ ຕ່າງໆ ແລະ ຄຸນນະພາບຂອງຂໍ້ມູນຈຶ່ງແມ່ນໜ້າທີ່ຂອງນັກກວດກາ. ສະຫຼຸບແລ້ວໃນຖານະເປັນນັກກວດກາ, ທ່ານຈະຕ້ອງ:

. ຮັບປະກັນໃຫ້ນັກເດີນສຳຫຼວດປະຕິບັດວຽກໄປຕາມຄຳແນະນຳ ແລະ ວິທີການສຳຫຼວດຢ່າງຖືກ ຕ້ອງ.

. ພົວພັນກັບນັກເດີນສຳຫຼວດຂອງທ່ານຕະຫຼອດເວລາການເດີນສຳຫຼວດ.

. ຮັບປະກັນໃຫ້ນັກເດີນສຳຫຼວດແຕ່ລະຄົນມີວັດຖຸອຸປະກອນທີ່ຈຳເປັນຄົບຖ້ວນ.

. ກວດກາ ແລະເກັບກຳວຽກຂອງນັກເດີນສຳຫຼວດ ແລະຊ່ວຍເຂົາເຈົ້າແກ້ບັນຫາທີ່ເກີດມີໃນພາກສະ ໜາມ.

ໃຫ້ຈຳໄວ້ວ່າ ການກວດກາວຽກຂອງນັກເດີນສຳຫຼວດແມ່ນວຽກທີ່ຂາດບໍ່ໄດ້ຂອງການສຳຫຼວດພົນລະ ເມືອງ ແລະທີ່ຢູ່ອາໄສ, ມີຈຸດປະສົງເພື່ອເຮັດໃຫ້ຄຸນນະພາບຂອງການສຳຫຼວດດີຂຶ້ນ. ເພື່ອໃຫ້ວຽກງານນີ້ມີປະ ສິດທິພາບ ແລະ ປະສິດທິຜົນ, ທ່ານຈະຕ້ອງເຂົ້າໃຈທຸກໆຂັ້ນຕອນຢ່າງລະອຽດອ່ອນຢູ່ໃນປື້ມຄູ່ມືຂອງນັກເດີນ ສຳຫຼວດ ແລະຄູ່ມືຂອງນັກກວດກາ, ຕ້ອງຮັບປະກັນໃຫ້ຮູ້ການຈົດກ່າຍແບບສອບຖາມເປັນຢ່າງດີ ແລະຕ້ອງ ຮູ້ທຸກລາຍລະອຽດກ່ຽວກັບເຂດກວດກາທີ່ຕົນຕົນຮັບຜິດຊອບຄື: ທີ່ຕັ້ງ, ຂອບເຂດຊາຍແດນ, ຊື່ນັກເດີນສຳຫຼວດ ແຕ່ລະຄົນທີ່ຢູ່ພາຍໃຕ້ການກວດກາຂອງທ່ານ.

## 2. ການເຄື່ອນໄຫວກ່ອນ ແລະໃນໄລຍະການເດີນສຳຫລວດ

### 2.1 ການຝຶກອົບຮົມນັກກວດກາ

ນັກກວດກາທຸກຄົນຕ້ອງເຂົ້າຮ່ວມການຝຶກອົບຮົມເພື່ອໃຫ້ມີຄວາມເຂົ້າໃຈຢ່າງຈະແຈ້ງເຖິງໂຄງປະກອບ ຂອງແບບສອບຖາມ ແລະ ໃຫ້ຮູ້ຈັກການຈົດກ່າຍຄຳຕອບເຂົ້າໃນແບບສອບຖາມ, ແລະ ກໍ່ຕ້ອງເຂົ້າຮ່ວມການ ເຄື່ອນໄຫວ ແລະ ຂັ້ນຕອນຕ່າງໆພ້ອມນັ້ນຕ້ອງຮູ້ຈັກບົດບາດຂອງຕົນໃນການສຳຫຼວດພົນລະເມືອງ. ນັກກວດ ກາຕ້ອງຝຶກອົບຮົມວຽກດັ່ງກ່າວ ຮ່ວມກັບພະນັກງານສຳຫຼວດພົນລະເມືອງຂັ້ນເມືອງ.

ພາຍຫຼັງການຝຶກອົບຮົມແລ້ວຈະໄດ້ກະກຽມການຝຶກອົບຮົບສຳລັບນັກເດີນສຳຫຼວດ ຊຶ່ງພະນັກງານສຳ ຫຼວດພົນລະເມືອງຂັ້ນເມືອງແລະທີ່ຢູ່ອາໄສ, ນັກກວດກາເປັນຄູຝຶກ. ໃນເວລາດຽວກັນນັ້ນ, ນັກກວດກາເປັນຜູ້ ຂຶ້ນແຜນເຄື່ອນໄຫວການສຳຫຼວດພົນລະເມືອງ ແລະທີ່ຢູ່ອາໄສ, ຕິດຕາມດູແລນັກເດີນສຳຫຼວດຂອງຕົນໃນໄລ ຍະຝຶກອົບຮົມ. ນີ້ເປັນຂັ້ນຕອນໜຶ່ງ ຊຶ່ງນັກກວດກາຈະສາມາດຮູ້ຈັກກັບນັກເດີນສຳຫຼວດຂອງຕົນເອງ, ນັກເດີນ ສຳຫຼວດກໍ່ຈະຮູ້ໄດ້ວ່າ ນັກ ກວດກາຂອງຕົນແມ່ນໃຜ ?

**ໃນຕອນທ້າຍຂອງການຝຶກອົບຮົມ, ນັກກວດກາຕ້ອງໃຫ້ມີຄວາມພ້ອມວ່າ:**

- ນັກເດີນສຳຫຼວດຂອງຕົນໄດ້ຮັບວັດຖຸອຸປະກອນອັນຈຳເປັນສຳລັບເດີນສຳຫລວດ
- ກວດກາບັນຊີຄົບຖ້ວນຄັກແນ່ແລ້ວໃຫ້ນັກເດີນສຳຫຼວດເຊັນຮັບ.

- ການຈັດການການເດີນທາງໄປເຖິງເຂດເດີນສຳຫລວດຕ້ອງມີການກະກຽມລ່ວງໜ້າ.
- ນັກກວດກາຕ້ອງຮູ້ພະນັກງານສຳຫຼວດພົນລະເມືອງຂອງຕົນເອງ

ພາກທີ່ມີຄວາມສຳຄັນທີ່ສຸດ ໃນການຝຶກອົບຮົມໃຫ້ແກ່ນັກເດີນສຳຫຼວດແມ່ນການຝຶກຫັດການສຳພາດຂອງນັກເດີນສຳຫຼວດຊຶ່ງຢູ່ພາຍໃຕ້ການແນະນຳຂອງນັກກວດກາ ຈາກການສຳພາດດັ່ງກ່າວ ບວກກັບວຽກຕ່າງໆໃນຫ້ອງຮຽນ ທ່ານສາມາດຈັດອັນດັບນັກເດີນສຳຫຼວດໂດຍອີງໃສ່ຄວາມຮັບຮູ້ຂອງນັກເດີນສຳຫຼວດເອງ.

ປຶກສາຫາລືກັບພະນັກງານສຳຫຼວດພົນລະເມືອງຂັ້ນເມືອງ ແລະ ທ່ານຈະໄດ້ແບ່ງນັກເດີນສຳຫຼວດໄປຫາເຂດເດີນສຳຫຼວດຕ່າງໆໂດຍອີງໃສ່ຕາຕະລາງ 01 ຂອງການຂຶ້ນບັນຊີຄົວເຮືອນທີ່ມີຢູ່ແລ້ວ, ຕິດຕາມແຕ່ລະເຂດສຳຫຼວດ ແລະເສັ້ນທາງທີ່ສາມາດໄປຫາກັນໄດ້ໃນຂອບເຂດເມືອງນັ້ນໆ.

### 2.1.1 ການຂົນສົ່ງພົບຄວາມຫຍຸ້ງຍາກ

ມີບາງພື້ນທີ່ໃນ ສ ປ ປ ລາວ ຈະເດີນທາງໄປເຖິງເຂດເດີນສຳຫຼວດໃນເວລາອັນສັ້ນໆນັ້ນແມ່ນພົບຄວາມຫຍຸ້ງຍາກຫຼາຍ, ເປັນຕົ້ນແມ່ນເຂດຮ່າງໄກສອກຫລີກ ແລະເຂດທີ່ບໍ່ມີເສັ້ນທາງຄົມມະນາຄົມ ຖ້າເຂດກວດກາຂອງທ່ານ ຫາກມີພື້ນທີ່ຄືດັ່ງກ່າວທີ່ຖືກມອບໝາຍກ່ອນການຝຶກອົບຮົມ. ທ່ານຕ້ອງຄັດເລືອກນັກເດີນສຳຫຼວດທີ່ດີໄປສຳຫລວດ. ການເດີນທາງໄປຫາບ່ອນຄືດັ່ງກ່າວມາຂ້າງເທິງນັ້ນຕ້ອງມີການວາງແຜນລ່ວງໜ້າ. ຕ້ອງຫລີກເວັ້ນການເດີນທາງທີ່ບໍ່ຈຳເປັນ.ໃນວັນສຸດທ້າຍຂອງການຝຶກອົບຮົມ ທ່ານຈະຕ້ອງລົມກັບນັກເດີນສຳຫລວດຂອງເພື່ອວາງແຜນໄລຍະການເດີນສຳຫລວດ, ໃຫ້ໄປເຖິງເຂດເດີນສຳຫລວດຂອງທຸກຄົນທີ່ຕົນຮັບຜິດຊອບ. ນັກກວດກາທຸກຄົນຕ້ອງຂຽນແຜນການ ການເດີນທາງປະໄວ້ໃຫ້ພະນັກງານຫ້ອງການກອງເລຂາຂັ້ນເມືອງ1 (ໜຶ່ງ) ສະບັບ ເພື່ອໃຫ້ມີການຕິດຕໍ່ກັນໄດ້ສະດວກ.

## 2.2 ການເຄື່ອນໄຫວກ່ອນການເດີນສຳຫລວດ

ນັກກວດກາຈະຕ້ອງໄປເຖິງເຂດຕົນຮັບຜິດຊອບໃນເວລາອັນເໝາະສົມກ່ອນການເດີນສຳຫຼວດ,ນັກກວດກາແຕ່ລະຄົນຕ້ອງມີທີ່ພັກອາໃສສຳລັບຕົນເອງຢູ່ພາຍໃນເຂດກວດກາຂອງຕົນ ແລະທີ່ພັກດັ່ງກ່າວ ຕ້ອງເປັນບ່ອນທີສະດວກສົມຄວນໃນການເຄື່ອນຍ້າຍໄປມາ

**ພາຍຫຼັງທີ່ໄດ້ກະກຽມທີ່ພັກອາໃສແລ້ວນັກກວດກາຈຳຕ້ອງ:**

- ສະເໜີຕົນເອງຕໍ່ອຳນາດການປົກຄອງທ້ອງຖິ່ນ.
- ແຈ້ງໃຫ້ເຂົາເຈົ້າຮູ້ກ່ຽວກັບການສຳຫຼວດພົນລະເມືອງ.
- ປັບຕົວເຂົ້າກັບສະພາບເຂດກວດກາທີ່ຕົນເອງຮັບຜິດຊອບຊຶ່ງໄດ້ກຳນົດມາກ່ອນແລ້ວ.
- ປຶກສາຫາລື ແລະຈຳແນກບັນຫາຊາຍແດນລະຫວ່າງບັນດາເຂດສຳຫຼວດດ້ວຍກັນກັບທີມງານຕົນ.
- ກວດກາເບິ່ງວ່າ ກ່ອນຈະເດີນສຳຫຼວດວຽກທຸກຢ່າງແມ່ນ ນັກເດີນສຳຫຼວດກຽມພ້ອມປະຈຳທີ່ ຢູ່ພາຍໃນເຂດເດີນສຳຫຼວດຊຶ່ງເຂົາເຈົ້າໄດ້ຖືກມອບໝາຍໃຫ້.

- ຕ້ອງແນ່ໃຈວ່ານັກເດີນສຳຫຼວດໄດ້ກະກຽມແຜນການການເດີນສຳຫຼວດໃນແຕ່ລະວັນ ແລະໄດ້ມີການນັດພົບກັບແຕ່ລະຄົວເຮືອນ.

## 2.3.ການເຄື່ອນໄຫວໃນໄລຍະການເດີນສຳຫລວດ.

- ນັກກວດກາຕ້ອງກຽມພ້ອມເອກະສານໃຫ້ຄົບຖ້ວນ
- ເມື່ອນັກກວດກາໄປເຖິງເຂດເດີນສຳຫຼວດໃດໜຶ່ງ,ທ່ານຈະຕ້ອງປະຕິບັດຕາມຂັ້ນຕອນການຄວບຄຸມຄຸນນະພາບ ທີ່ໄດ້ກ່າວໄວ້ໃນປຶ້ມຄູ່ມືນີ້

❖ **ເນື້ອໃນແບບສອບຖາມປະກອບດ້ວຍ:**

ກ. ຂໍ້ມູນເອກກະລັກ :

ຂໍ້ມູນເອກະລັກປະກອບດ້ວຍ :

ລະຫັດແຂວງ: ມີສອງຕົວເລກ.

ລະຫັດເມືອງ : ມີສອງຕົວເລກ.

ລະຫັດບ້ານ : ມີສາມຕົວເລກ.

ເລກທີເຂດສຳຫລວດ : ມີໜຶ່ງຕົວເລກ.

ເລກທີຄົວເຮືອນ : ມີສາມຕົວເລກ.

ແຕ່ລະເຂດເດີນສຳຫລວດຈະມີລະຫັດຂອງຕົນ ໂດຍແມ່ນນັກກວດກາຂອງເຂດນັ້ນເປັນຜູ້ກຳນົດຊຶ່ງອີງຕາມລະຫັດທີ່ຕັ້ງຂອງແຕ່ລະແຂວງ, ເມືອງ , ບ້ານ ແລະ ເຂດເດີນສຳຫລວດ ເປັນ 8 ຕົວເລກ. ທຸກໃບແບບສອບຖາມໃນເຂດສຳຫລວດໜຶ່ງຕ້ອງມີເລກຄືກັນ. ສຳລັບເຂດເດີນສຳຫລວດ ຈົດກ່າຍໂດຍນັກເດີນສຳຫລວດເຂົ້າໃສ່ທຸກໆປຶ້ມແບບສອບຖາມທີ່ຂຶ້ນກັບເຂດສຳຫລວດນັ້ນ. ກວດເບິ່ງວ່າ ຕາມລະຫັດທີ່ຕັ້ງໄດ້ຈົດກ່າຍຄົບຖ້ວນ ແລະ ຖືກຕ້ອງໃນ ພາກ ກ: ຂອງໃບແບບສອບຖາມແລ້ວ ຫລື ບໍ່ .

ລະຫັດຂອງຄົວເຮືອນ ແມ່ນສາມຕົວເລກຊຶ່ງການກຳນົດລະຫັດດັ່ງກ່າວຕໍ່ແຕ່ລະຄົວເຮືອນ ແມ່ນນັກເດີນສຳຫລວດເປັນຜູ້ຮັບຜິດຊອບ, ແຕ່ລະຄົວເຮືອນໃນເຂດເດີນສຳຫລວດຄວນມີນຳ້ເບີຂອງ ແຕ່ລະຄົວເຮືອນ ພ້ອມກັນນັ້ນສອງ ຫລື ຫຼາຍຄົວເຮືອນໃນເຂດເດີນສຳຫລວດດຽວກັນ ບໍ່ສາມາດມີນຳ້ເບີຄົວເຮືອນຄື ກັນ, ນຳ້ເບີຂອງຄົວເຮືອນ ສ່ວນໃຫ່ຍ ຈະຕ້ອງຕໍ່ເນື່ອງກັນໂດຍປາດສະຈາກຊ່ອງຫ່ວາງ ຕົວຢ່າງ: ນຳ້ເບີຄົວ ເຮືອນ 1, 2, 3, 4, 8, 9, 10 ພ້ອມກັນນັ້ນຕ້ອງຫລີກລຽງນຳ້ເບີຄົວເຮືອນທີ່ໃຊ້ນຳ້ເບີອັນດຽວກັນ. ຕ້ອງຈຳໄວ້ວ່າຄົວເຮືອນທີ່ມີຈຳນວນພົນຫລາຍກວ່າ 10 ຄົນຕ້ອງໃຊ້ໃບແບບສອບຖາມຫຼາຍກ່ວາ 1 ໃບ. ທຸກໃບແບບສອບຖາມທີ່ໃຊ້ສຳລັບ ຄົວເຮືອນດັ່ງກ່າວຕ້ອງມີນຳ້ເບີຄົວເຮືອນຄືກັນ.

ຄົວເຮືອນລວມໝູ່ ມີນຳ້ເບີເລີ້ມແຕ່ 801 ສຳລັບຄົວເຮືອນລວມໝູ່ທຳອິດໃນເຂດເດີນສຳຫລວດ ຄວນຈຳໄວ້ວ່າ ສຳລັບຄົວເຮືອນລວມໝູ່, ຄວນມີຄຳຕອບບາງຄຳຖາມ ດັ່ງນີ້ : ຄຳຖາມທີ 1 ແລະ 3- 20, ສ່ວນຄຳຖາມ 2 ແລະ 21-34 ຈະບໍ່ຖືກຖາມ( ສຳລັບຄຳຖາມທີ 35 ແມ່ນຈົດກ່າຍຈຳນວນພົນລວມ).

ມີໃຜແດ່ເປັນສະມາຊິກໃນຄົວເຮືອນໝາຍເຖິງຄົນທີ່ມີໜ້າຢູ່ເປັນປະຈຳ ແລະບໍ່ມີໜ້າຢູ່ຊົ່ວຄາວ ໃຫ້ສັງເກດເບິ່ງທ້າວ ຫຼືນາງ ແລະຈຳນວນຄົນໃນຄົວເຮືອນມີຈັກຄົນເພື່ອສົມທຽບໃສ່ຈຳນວນລວມ ຊາຍ, ຍິງໃນຄຳຖາມສຸດທ້າຍ.

ພາກ ຂ : ສຳລັບໝົດທຸກຄົນ.

ຄຳຖາມທີ 1 :

ຊື່ຂອງສະມາຊິກຄົວເຮືອນຈະບໍ່ຈົດກ່າຍເປັນຕົວເລກ ທ່ານບໍ່ຄວນສະເໜີແນະນຳດັດແກ້ຊື່. ເຖິງຢ່າງໃດກໍ່ຕາມຄວນຈຳໄວ້ວ່າ ບັນດາຊື່ເຫລົ່ານີ້ອາດຈະເປັນຜົນປະໂຫຍດໃນເວລາດັດແກ້, ດີທີ່ສຸດແມ່ນໃຫ້ຂຽນທ້າວ ຫຼືນາງຢູ່ຕໍ່ໜ້າຊື່ນາມສະກຸນ.

ບັນດາສະມາຊິກຂອງຄົວເຮືອນແມ່ນມີຄວາມສຳຄັນ.ທຸກຄົນໃນຄົວເຮືອນຄວນມີເລກທີບຸກຄົນຫົວໜ້າຄົວເຮືອນຕ້ອງຖືກຈົດກ່າຍເປັນຜູ້ທຳອິດ ແລະ ສະມາຊິກອື່ນໆເປັນເລກທີ່ຕໍ່ໆໄປກວດສະມາຊິກຄົວເຮືອນຢ່າງລະມັດລະວັງຖ້າກໍລະນີທາກໃຊ້ໃບແບບສອບຖາມຫຼາຍໃບ.

ຄວນຈຳໄວ້ວ່າຄົວເຮືອນລວມໝູ່ອາດມີຈຳນວນຫລາຍຮ້ອຍຄົນ; ສະນັ້ນແຕ່ເລກທີ 01-99 ຈະເປັນຄົວເຮືອນ ລວມໝູ່ໜຶ່ງ, ສ່ວນເລກທີ 100 - 199 ຈະເປັນຄົວເຮືອນໝູ່ທີສອງ, ໃນຄົວເຮືອນລວມໝູ່ ທີສອງກໍ່ຕ້ອງເລີ້ມແຕ່ 01-99 ແລະ ເຮັດແບບນີ້ຕໍ່ໆໄປໝາຍຄວາມວ່າ ຄົວເຮືອນລວມໝູ່ໜຶ່ງໃຫ້ບັນຈຸພຽງ 99 ຄົນ. ເພື່ອສະດວກໃຫ້ແກ່ການສຳພາດ ແລະ ການຮັບຜິດຊອບຂອງນັກເດີນສຳຫລວດ, (ໝາຍຄວາມວ່ານັກເດີນສຳຫລວດທີ່ຮັບຜິດຊອບສຳຫລວດຄົວເຮືອນລວມໝູ່ສະເພາະແມ່ນບໍ່ເກີນ 100 ຄົນ ຕໍ່ 1 ນັກເດີນສຳຫລວດ).

ສຳລັບທຸກຄົນທີ່ຢູ່ໃນຄົວເຮືອນລວມໝູ່ແມ່ນໃຊ້ປື້ມແບບສອບຖາມສະເພາະແລະ ຈະມີຮູບກາໂຣໃຫ້ໝາຍ ☐ ໃສ່ຢູ່ໜ້າປົກ.

ຄຳຖາມທີ 2+3:

ທຸກຄົນຕ້ອງຖືກຈົດເຂົ້າ 1 ( ຊາຍ ) ຫລື 2 ( ຍິງ ). ຕ້ອງກວດວ່າເພດຕ້ອງສອດຄ່ອງກັບຊື່ ແລະ ຄຳຖາມ ອື່ນໆ ໂດຍສະເພາະຄຳຖາມທີ 3 ແລະ ຄຳຖາມທີ 18 - 20 ຖ້າເພດ ບໍ່ຖືກໝາຍສຳລັບໜຶ່ງ ຫລື ຫລາຍຄົນ ໃນຄົວເຮືອນ ຫຼື ໝາຍຜິດເພດກໍ ຄວນຊອກຄຳຕອບທີ່ຖືກຕ້ອງ.

ເພດ ແລະ ສາຍພົວພັນກັບຫົວໜ້າຄົວເຮືອນ:

ຖ້າຫົວໜ້າຄົວເຮືອນແມ່ນຜູ້ຊາຍ, ເມຍຂອງລາວຕ້ອງແມ່ນເພດຍິງ, ຫຼືຖ້າຫົວໜ້າຄົວເຮືອນແມ່ນເພດຍິງ, ຜົວຂອງລາວຕ້ອງແມ່ນເພດຊາຍ. ບາງເທື່ອກໍອາດແມ່ນລູກຊາຍ ຫຼື ລູກສາວເປັນຫົວໜ້າຄົວເຮືອນ.

- *ອາຍຸ ແລະສາຍພົວກັບຫົວໜ້າຄົວເຮືອນ:*

ຄວາມແຕກຕ່າງໃນອາຍຸລະຫ່ວາງ, ຫົວໜ້າຄົວເຮືອນ ແລະ ລູກຂອງລາວຈະຕ້ອງສົມເຫດສົມຜົນ,

ຕົວຢ່າງ: ຖ້າຄວາມແຕກຕ່າງລະຫວ່າງອາຍຸຂອງຫົວໜ້າຄົວເຮືອນ ແລະ ລູກຂອງລາວມີອາຍຸພຽງ 12 ປີນັ້ນ ແມ່ນເປັນໄປບໍ່ໄດ້( ລູກຊາຍ ແລະລູກສາວບໍ່ສາມາດມີອາຍຸຫຼາຍກວ່າ ພໍ່, ແມ່).

ຄຳຖາມທີ 4: ທ່ານມີອາຍຸຈັກປີ

ອາຍຸນີ້ໝາຍເຖິງອາຍຸເຕັມ ແລະ ຕອນທີ່ຖືກຈົດກ່າຍເຂົ້າໃນໃບແບບສອບຖາມ ຈະຕ້ອງເປັນດັ່ງນີ້ ( 0 ສໍາລັບເດັກນ້ອຍຕໍ່າກວ່າ 1 ປີ , ອາຍຸຕົວຈິງສໍາລັບບຸກຄົນອື່ນ ) ຕົວຢ່າງ: ທ້າວ ຄໍາສິງມີ ອາຍຸ 23 ປີ ກັບ 7 ເດືອນ ( ຊຶ່ງໄລ່ແຕ່ປີລາວເກີດຈົນຮອດມື້ສໍາຫລວດ ) ເວລາທ່ານກວດພົບໃນໃບແບບສອບຖາມຖືກຈົດກ່າຍ 23,7 ທ່ານ ຕ້ອງດັດແກ້ເປັນ 23 ເທົ່ານັ້ນ.

ກວດເບິ່ງວ່າອາຍຸມັນສອດຄ່ອງກັບຂໍ້ມູນອື່ນໆ ບໍ່ ໃນໃບແບບສອບຖາມ, ຖ້າວ່າອາຍຸຖືກຈົດ ຂາດສໍາລັບຄົນໜຶ່ງ ຫລື ຫລາຍຄົນໃຫ້ພະຍາຍາມຊອກຫາຄໍາຕອບທີ່ຖືກຕ້ອງຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.

ໃຫ້ກວດເບິ່ງການຈົດກ່າຍອາຍຸຂອງແຕ່ລະຄົນ ວ່າຖືກຕ້ອງຕາມການຝຶກອົບຮົມແລ້ວບໍ ?

ຕົວຢ່າງ: ຊ່ອງນີ້ມີ 3 ຫ້ອງສໍາລັບຄົນທີ່ມີອາຍຸ 100 ປີຂຶ້ນໄປ,ສໍາລັບຄົນທີ່ມີອາຍຸ 1 ຕົວເລກ ຫຼື 2 ຕົວເລກເຊັ່ນ: 5 ປີ ແລະ 10 ປີ ໃຫ້ຂຽນ |__|__|5|, |__|1|0| , ໝາຍຄວາມວ່າຈະບໍ່ມີເລກ 0 ທາງດ້ານໜ້າ.

ຄໍາຖາມທີ 5 : ທ່ານເກີດຢູ່ໃສ.

ສໍາລັບຜູ້ທີ່ເກີດຢູ່ ສ.ປ.ປ.ລາວ ລະຫັດເມືອງ ແລະແຂວງສໍາລັບການສໍາຫລວດພົນລະເມືອງ ໄດ້ກໍານົດໄວ້ແລ້ວ ສໍາລັບຜູ້ທີ່ບໍ່ໄດ້ເກີດຢູ່ ສ.ປ.ປ ລາວໃຫ້ຈົດແຕ່ພຽງລະຫັດປະເທດທີ່ເຂົາເຈົ້າເກີດໃສ່ຊຶ່ງໄດ້ກໍານົດລະຫັດໄວ້ແລ້ວໃນຫຼັງໃບແບບສອບຖາມ,ຖ້າເກີດຢູ່ບ່ອນດຽວກັບທີ່ອາໃສຢູ່ປະຈຸບັນແມ່ນໃຫ້ໝາຍຕີນກາໃສ່.

ທຸກໆຄົນຈະຕ້ອງມີລະຫັດແຂວງ, ເມືອງ ຫລື ປະເທດທີ່ເຂົາເຈົ້າເກີດໃສ່.. ໃນກໍລະນີນີ້ທ່ານຈະຕ້ອງກວດວ່າລະຫັດທີ່ໃສ່ນັ້ນຖືກຕ້ອງຫລືຍັງ. ໃນບາງກໍລະນີ ນັກເດີນສໍາຫລວດບໍ່ສາມາດໃສ່ລະຫັດໄດ້ ທ່ານຕ້ອງເບິ່ງຄໍາເຫັນໃນໃບແບບສອບຖາມວ່ານັກເດີນສໍາຫລວດໄດ້ຂຽນຫຍັງໄວ້, ຫຼັງຈາກນັ້ນຈຶ່ງກໍານົດວ່າຈະໃສ່ລະຫັດ ແຂວງ, ເມືອງ ແລະ ປະເທດ ແນວໃດ.

ສະຖານທີ່ເກີດມີ 4 ຫ້ອງ ໝາຍຄວາມວ່າຕ້ອງຂຽນຕົວເລກທັງໝົດ 4 ຕົວ ( ສໍາລັບຄົນທີ່ເກີດຢູ່ລາວ ) ສໍາລັບຄົນທີ່ເກີດຢູ່ຕ່າງປະເທດເຊັ່ນ: ເກີດຢູ່ປະເທດຂະເໝັນເລກລະຫັດແມ່ນ 1 ຢູ່ໃນຫ້ອງແບບສອບຖາມ

|__|__|__|1|

ຄໍາຖາມທີ 6 : ວັນທີ 1 ເດືອນ 3 ປີ 1995 ທ່ານຢູ່ໃສ.

ຄໍາຖາມນີ້ວິທີການຈົດກ່າຍຢາກຄ້າຍຄືຄໍາຖາມທີ 5 ຊຶ່ງໃຊ້ລະຫັດແຂວງ, ເມືອງ ແລະ ປະເທດເຊັ່ນກັນ ຖ້າແມ່ນຢູ່ບ່ອນເກົ່າຫມາຍເຄື່ອງໝາຍ ( X ) ອີງໃສ່ ຫ້ອງ 4 ຫລ່ຽມ.

ຄໍາຖາມທີ 7 : ສັນຊາດ.

ທຸກຄົນຄວນມີລະຫັດປະເທດສໍາລັບຊາດ, ສັນຊາດລາວຕ້ອງຫມາຍເຄື່ອງໝາຍຕີນກາ ( X ) ອີງໃສ່ຫ້ອງ 4 ຫລ່ຽມ.ສໍາລັບບຸກຄົນທີ່ບໍ່ແມ່ນສັນຊາດລາວຕ້ອງຈົດກ່າຍ ລະຫັດປະເທດສໍາລັບຊາດ ຕາມ ສາລະບານຢູ່ຫຼັງໃບແບບສອບຖາມ. ຖ້າຈົດຂ້າມລະຫັດສໍາລັບໜຶ່ງຫຼືຫຼາຍຄົນໃນຄົວເຮືອນໜຶ່ງຄວນພະຍາຍາມຊອກຄໍາຕອບທີ່ຖືກຕ້ອງຈາກແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ.

- ໝາຍຄວາມວ່າໃນຄຳຖາມທີ 5-6-7-8: ຖ້າມີການໝາຍຕົບກາໃສ່ຫ້ອງ 4 ຫລ່ຽມແມ່ນບໍ່ມີຕົວເລກ, ຖ້າມີຕົວເລກບໍ່ມີໝາຍຕົບກາໃນຫ້ອງ 4 ຫລ່ຽມ.

ຄຳຖາມທີ 9 : ສະພາບສົມລົດ.

ຄວນກວດເບິ່ງວ່າສະພາບສົມລົດມັນສອດຄ່ອງກັບແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ.ຖ້າສະພາບສົມລົດຖືກຈົດຂ້າມສຳລັບໜຶ່ງ ຫລື ຫຼາຍຄົນໃນຄົວເຮືອນໃຫ້ພະຍາຍາມຊອກຫາຄຳຕອບຈາກແຫລ່ງຂໍ້ມູນອື່ນໃນໃບແບບສອບຖາມ. (ເດັກບໍ່ຄວນມີສະພາບສົມລົດ)

ຄຳຖາມທີ 10 : ສາດສະໜາ.

ຄົນຜູ້ໜຶ່ງບໍ່ຄວນມີ 2 ສາສະໜາ, ທຸກຄົນຄວນມີລະຫັດໜຶ່ງໃນບັນດາລະຫັດດັ່ງລຸ່ມນີ້:

1.ສາດສະໜາພຸດ (ພາມກຳຈັດເຂົ້າໃນປະເພດນີ້)

1. ເຢຊູຄິດ (ຄຣິດສະຕຽນ,ຄຣິດສະຈັກ ແລະ ຄາທໍລິກ ແມ່ນຈັດເຂົ້າໃນປະເພດນີ້)
2. ບາຮາຍ
3. ອິດສະລາມ
4. ອື່ນໆ. . . .(ນອກຈາກສາສະໜາທີ່ບໍ່ໄດ້ລະບຸໄວ້)

9.ບໍ່ມີຄຳຕອບ(ບໍ່ຮູ້ ແລະ ສາສໜາຜີກຳຈັດເຂົ້າໃນປະເພດນີ້)

**ພາກ ຄ : ສຳລັບທຸກຄົນທີ່ມີອາຍຸ 6 ປີຂຶ້ນໄປ.**

ສຳລັບຄົນທີ່ມີອາຍຸຕ່ຳກ່ວາ 6 ປີ ຊຶ່ງມີຄຳຕອບໃນຄຳຖາມທີ 4, ອາຍຸ ແຕ່ 0-5 ປີ ຕ້ອງຖືກໝາຍ (X) ໃສ່ຄຳຖາມທີ 11 (ຕ່ຳກວ່າ 6 ປີ ) ແລະ ສຳລັບຄຳຖາມໃນພາກນີ້ ການໝາຍ (X) ສຳລັບ ຈະໃຊ້ເຊັ່ນດຽວກັນໃນພາກ:ງ ສຳບັບຄຳຖາມ 15 (ຕ່ຳກວ່າ 10 ປີ). ຕ້ອງຈຳໄວ້ວ່າທຸກໆສະມາຊິກໃນຄົວເຮືອນນີ້ທີ່ມີອາຍຸຕ່ຳ ກ່ວາ 6 ປີ ຈະບໍ່ຖືກສຳພາດຄຳຖາມເຫຼົ່ານີ້ ທ່ານຕ້ອງໝາຍ (X) ໃສ່ແທນບັນດາຄຳຕອບເຫຼົ່ານັ້ນ. ລະດັບການສຶກສາຈະຕ້ອງສອດຄ່ອງກັບອາຍຸ ຕົວຢ່າງ: ຄົນມີອາຍຸ 12 ປີ ບໍ່ສາມາດຈົບອຸດົມ/ມັດທະຍົມຕອນປາຍໄດ້ໃນລະບົບການສຶກສາປົກກະຕິ, ໃຫ້ສັງເກດເບິ່ງການເກາະກ່າຍຂອງຄຳຖາມ ແລະການເຕັ້ນຂ້າມ.

ຄຳຖາມທີ 11 : ທ່ານສາມາດອ່ານ ແລະ ຂຽນພາສາລາວໄດ້ບໍ່.

ທຸກຄົນທີ່ມີອາຍຸ 6 ປີຂຶ້ນໄປຕ້ອງມີຄຳຕອບສາມາດອ່ານ ແລະ ຂຽນພາສາລາວໄດ້ ຫລື ບໍ່ຕາມລະຫັດດັ່ງນີ້: 1=ໄດ້; 2=ບໍ່ໄດ້ຂ້າມໄປຂໍ້" ງ "; 6=ຕ່ຳກວ່າ6ປີ; 9=ບໍ່ຮູ້.

ການອ່ານ ແລະ ຂຽນໄດ້ ຕົວຢ່າງ: ຄວາມສາມາດອ່ານ ແລະ ຂຽນຈົດໝາຍໄດ້ບໍ່ຈຳເປັນຈະຕ້ອງເຈະຈົງໃສ່ຫລັກໄວຍະກອນປານໃດ,ພໍອ່ານອອກຂຽນໄດ້ກໍຖືວ່າແມ່ນ.(ການອ່ານ ແລະ ຂຽນພາສາລາວບໍ່ໝາຍເຖິງແຕ່ຜູ້ທີ່ເຄີຍຮຽນໜັງສືເທົ່ານັ້ນ,ມີບາງຄົນບໍ່ເຄີຍເຂົ້າໂຮງຮຽນແຕ່ສາມາດອ່ານອອກຂຽນໄດ້ກໍມີ).

ຄຳຖາມທີ 12 : ທ່ານເຄີຍເຂົ້າໂຮງຮຽນບໍ່.

ທຸກຄົນທີ່ມີອາຍຸ 6 ປີຂຶ້ນໄປ ຄວນມີຄຳຕອບລະຫັດໃດໜຶ່ງຕາມການຝຶກອົບຮົມ ແລະ ການແນະນຳວິທີຈົດກ່າຍຢູ່ໃນໃບແບບສອບຖາມ.ການເຂົ້າໂຮງຮຽນບໍ່ສະເພາະແຕ່ໂຮງຮຽນສາຍສາມັນເທົ່ານັ້ນ,ຍັງມີໂຮງຮຽນນອກລະບົບ,ໂຮງຮຽນປະຊາສຶກສາ,ໂຮງຮຽນສົງ.. .

ຄຳຖາມທີ 13 : ລະດັບການສຶກສາສູງສຸດທີ່ ທ່ານຮຽນຈົບ ແມ່ນຊັ້ນໃດ?.

ລະຫັດທີ່ໃຊ້ເປັນຄຳຕອບ ມີຢູ່ຫຼັງໃບສອບຖາມ. ສຳລັບບຸກຄົນທີ່ບໍ່ເຄີຍເຂົ້າໂຮງຮຽນຈັກເທື່ອຊຶ່ງມີຄຳຕອບໃນຄຳຖາມທີ 12 ໃຫ້ໝາຍ (X) ໃສ່.ລະດັບການສຶກສາສູງສຸດຄວນຈະສອດຄ່ອງກັບຊ່ອງອາຍຸໃນຄຳຖາມທີ 4,ຕົວຢ່າງ ທ້າວ ສຳລີ ອາຍຸ 10 ປີ ປະຈຸບັນກຳລັງຮຽນຢູ່ ປະຖົມປີທີ 5 (ໝາຍຄວາມວ່າລະດັບ ການສຶກສາຂອງລາວຮຽນຈົບແມ່ນ ປະຖົມປີທີ 4 )

ຄຳຖາມທີ 14: ລະດັບວິຊາສະເພາະສູງສຸດທີ່ ທ່ານຮຽນ ແມ່ນຈົບຊັ້ນໃດ ?

ລະຫັດທີ່ໃຊ້ເປັນຄຳຕອບມີຢູ່ຫຼັງໃບສອບຖາມ, ຖ້າຄົນໃດຄົນໜຶ່ງໃນຄົວເຮືອນບໍ່ມີວິຊາສະເພາະ, ຫລືກຳລັງຮຽນຢູ່(ຮຽນບໍ່ທັນຈົບ)ໃຫ້ປະຫ້ອງຫວ່າງໄວ້ບໍ່ໃຫ້ຂຽນຫຍັງໃສ່.ແລະ ຂ້າມໄປຫາຄຳຖາມທີ15, ຄວນລະວັງລະດັບການສຶກສາສູງສຸດ ແລະ ລະດັບວິຊາສະເພາະທີ່ຮຽນຈົບສູງສຸດ.

ຕົວຢ່າງ: ທ້າວ ກິແດງ ລະດັບວິຊາສະເພາະສູງສຸດ(ຈົບມັດທະຍົມປາຍ)ລະຫັດ 33,ປະຈຸບັນລາວກຳລັງຮຽນຢູ່ປີສຸດທ້າຍຂອງມະຫາວິທະຍາໄລດົງໂດກ (ໝາຍຄວາມວ່າລະດັບວິຊາສະເພາະຂອງລາວຕອນເວລາໄປສຳພາດນັ້ນແມ່ນບໍ່ທັນມີ,ເພາະລາວຮຽນຍັງບໍ່ທັນໄດ້ຈົບ).

**ພາກ ງ : ສຳລັບທຸກຄົນທີ່ມີອາຍຸ 10 ປີ ຂຶ້ນໄປ.**

ສຳລັບບັນດາຄົນທີ່ມີອາຍຸຕ່ຳກວ່າ 10 ປີ ຂຶ້ນໄປ, ສຳລັບຜູ້ມີອາຍຸແຕ່ : 0 ປີ ຫາ 9 ປີ ໃນຄຳຖາມທີ 4, ບັນດາຄຳຖາມໃນ ພາກ ນີ້ຕ້ອງຈົດກ່າຍດ້ວຍເຄື່ອງໝາຍ (X) , ໝາຍຄວາມວ່າ ສະມາຊິກໃນຄົວເຮືອນທີ່ມີອາຍຸຕ່ຳກວ່າ 10 ປີຈະບໍ່ຖືກສຳພາດໃນບັນດາຄຳຖາມເຫຼົ່ານີ້. ບັນດາຄຳຖາມໃນພາກນີ້ມັນມີການພົວພັນກັນຢ່າງຊະນິດແໜ້ນ, ມັນຄວນຈະຖືກປະຕິບັດການກວດກາໃນໄລຍະເວລາດຽວກັນເພື່ອດັດແກ້.

- ການສຶກສາແລະອາຊີບຂອງຜູ້ຖືກສຳພາດຕ້ອງກົງກັບລະດັບການສຶກສາຂອງລາວເອງ, ຕົວຢ່າງ: ຄົນຜູ້ໜຶ່ງຊຶ່ງຮຽນຈົບມັດທະຍົມປາຍ ບໍ່ສາມາດເປັນນັກກົດໝາຍໄດ້ເຫລົ່ານີ້ເປັນຕົ້ນ.

ຄຳຖາມ ທີ 15 : ກິດຈະກຳຕົ້ນຕໍໃນ 12 ເດືອນ ຜ່ານມາຂອງ ທ່ານ ແມ່ນຫັຍງ.

ທຸກຄົນທີ່ມີອາຍຸ 10 ປີ ຂຶ້ນໄປຕ້ອງມີຄຳຕອບລະຫັດໜຶ່ງ ໃນບັນດາລະຫັດດັ່ງລຸ່ມນີ້: 01=ຜູ້ອອກແຮງງານໃຫ້ລັດ, 02 =ຜູ້ອອກແຮງງານໃຫ້ລັດວິສາຫະກິດ, 03 =ຜູ້ອອກແຮງງານໃຫ້ລັດ-ເອກະຊົນ, 04= ຜູ້ອອກແຮງງານໃຫ້ເອກະຊົນ, 05 =ຜູ້ໃຊ້ແຮງງານ( ນາຍຈ້າງ ), 06 = ເຮັດວຽກໃຫ້ຕົນເອງ,07 =ເຮັດວຽກໃຫ້ຄອບຄົວ (ບໍ່ໄດ້ຄ່າຈ້າງ ), 08= ກຳລັງຊອກວຽກເຮັດ / ຫວ່າງງານ, 09 = ນັກຮຽນ, 10 = ພໍ່ ເຮືອນ / ແມ່ເຮືອນ, 11= ເບັ້ຍບຳນານ / ເຈັບປ່ວຍ / ແກ່ສາລາ, 12= ອື່ນໆ.

ຕົວຢ່າງ:ຜູ້ອອກແຮງງານໃຫ້ຕົນເອງ(06) ແລະ (07)ຜູ້ທີ່ເຮັດວຽກໃຫ້ຄອບຄົວ(ໂດຍບໍ່ໄດ້ຮັບຄ່າຈ້າງ)

1.ຄອບຄົວທ້າວ ສີສຸວັນ ມີສະມາຊິກຄົວເຮືອນ3 ຄົນ,ກິດຈະກຳຕົ້ນຕໍໃນຄອບຄົວແມ່ນຊາວນາ .ລະຫັດທີ່ຈະໃສ່ດັ່ງນີ້:

ທ້າວ ສີສຸວັນ ໃສ່ລະຫັດ 06

ເມຍຂອງລາວ ໃສ່ລະຫັດ 07

ລູກຂອງລາວ ໃສ່ລະຫັດ 07

2.ໃນກໍລະນີ ເມຍທ້າວ ສີສຸວັນ ກິດຈະກຳຕົ້ນຕໍລາວທຳມາຄ້າຂາຍ ໃສ່ລະຫັດ 06,ສ່ວນລູກ ຖ້າບໍ່ມີກິດຈະກຳຂອງຕົນເອງຈະຊ່ວຍວຽກພໍ່ ຫລື ຊ່ວຍວຽກແມ່ແຕ່ບໍ່ໄດ້ຮັບຄ່າຈ້າງແມ່ນ ໃສ່ລະຫັດ 07.

ກວດເບິ່ງວ່າລະຫັດ ດັ່ງກ່າວນັ້ນສອດຄ່ອງກັບແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ. ຖ້າຈິດຂ້າມສຳລັບໜຶ່ງ ຫຼື ຫຼາຍຄົນໃນຄົວເຮືອນທີ່ມີອາຍຸ 10 ປີຂຶ້ນໄປໃຫ້ພະຍາຍາມຊອກຄຳຕອບ ແລະ ແກ້ໄຂໃຫ້ທັນການ.

ຄຳຖາມ ທີ 16 : ອາຊີບຕົ້ນຕໍໃນ 12 ເດືອນຜ່ານມາຂອງ ທ່ານ ແມ່ນຫຍັງ?.

ຄຳຖາມນີ້ໃຊ້ສະເພາະບຸກຄົນ ທີ່ມີຄຳຕອບໃນລະຫັດແຕ່ 01 - 07 ໃນຄຳຖາມທີ 15 ເຊັ່ນ : ຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ ລັດວິສາຫະກິດ, ຜູ້ອອກແຮງງານໃຫ້ລັດ - ເອກະຊົນ, ຜູ້ອອກແຮງງານໃຫ້ເອກະ ຊົນ, ຜູ້ໃຊ້ແຮງງານ(ນາຍຈ້າງ), ເຮັດວຽກໃຫ້ຕົນເອງ, ເຮັດວຽກໃຫ້ຄອບຄົວ (ບໍ່ໄດ້ ຄ່າຈ້າງ ).

ຈຳໄວ້ວ່າອາຊີບຕົ້ນຕໍຄວນຈະຂຽນເປັນຄຳເວົ້າ ແລະ ໃຫ້ຈະແຈ້ງ. ໃນກໍລະນີບໍ່ມີຄຳຕອບໃຫ້ພະຍາຍາມຊອກຄຳຕອບທີ່ຖືກຕ້ອງ. ອາຊີບຕົ້ນຕໍຂອງຜູ້ຖືກສຳພາດຕ້ອງສອດຄ່ອງກັບອາຍຸໃນຄຳຖາມທີ 4 ແລະ ລະດັບການສຶກສາສູງສຸດໃນຄຳຖາມທີ 13 ເຊັ່ນດຽວກັນ.

ຄຳຖາມ ທີ 17 : ຂະແໜງເສດຖະກິດຕົ້ນຕໍໃນ 12 ເດືອນຜ່ານມາຂອງທ່ານແມ່ນຂະແໜງຫຍັງ$

ຄຳຖາມນີ້ໃຊ້ສະເພາະບຸກຄົນ ທີ່ມີຄຳຕອບໃນລະຫັດແຕ່ 01 - 07 ໃນຄຳຖາມທີ 15 ເຊັ່ນ : ຜູ້ອອກແຮງງານໃຫ້ລັດ, ຜູ້ອອກແຮງງານໃຫ້ລັດວິສາຫະກິດ, ຜູ້ອອກແຮງງານໃຫ້ລັດ - ເອກະຊົນ, ຜູ້ອອກແຮງງານໃຫ້ເອກະຊົນ, ຜູ້ໃຊ້ແຮງງານ (ນາຍຈ້າງ), ເຮັດວຽກໃຫ້ຕົນເອງ, ເຮັດວຽກໃຫ້ຄອບຄົວ (ບໍ່ໄດ້ຄາຈ້າງ ).

ຈຳໄວ້ວ່າຂະແໜງເສດຖະກິດຕ້ອງຂຽນເປັນຄຳເວົ້າ,ຊຶ່ງເປັນຄຳຕອບທີ່ກ່ຽວກັບວຽກຕົ້ນຕໍທີ່ເຄີຍໄດ້ເຮັດຜ່ານມາແລ້ວ ໃຫ້ຂຽນໃສ່ຊ່ອງນີ້. ຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຄຳຕອບທີ່ຖືກຕ້ອງ. ຄຳຕອບໃນຂະແໜງເສດຖະກິດຕົ້ນຕໍຕ້ອງສອດຄ່ອງກັບອາຊີບ ໃນຄຳຖາມທີ່ 16.

**ພາກ ຈ : ສຳລັບແມ່ຍິງທີ່ມີອາຍຸ 15 - 49 ປີ.**

ພາກນີ້ຄວນໄດ້ຄຳຕອບສະເພາະແມ່ຍິງ ທີ່ມີອາຍຸ 15 - 49 ປີ. ໃນ ຄຳຖາມທີ 18 , 19 ແລະ 20. ສຳລັບຜູ້ຊາຍແມ່ນບໍ່ໄດ້ຖາມ .

ກວດກາຈຳນວນລູກທີ່ຢູ່ນຳຕົນເອງ ຫລື ໄປຢູ່ບ່ອນອື່ນໃນເວລາປະຕິບັດການສຳຫລວດມີຈັກຄົນ.

ຄຳຖາມທີ 18 : ທ່ານເຄີຍເກີດລູກມີຊີວິດບໍ?

ຄຳຕອບຕໍ່ຄຳຖາມນີ້ຕ້ອງໝາຍ ( x ) ໃສ່ຫ້ອງສີ່ລ່ຽມ ຂອງຄຳຖາມທີ 18, ສຳລັບແມ່ຍິງທຸກຄົນທີ່ມີອາຍຸ 15 - 49 ປີ. ຖ້າບໍ່ເຫັນໝາຍກໍ່ຕ້ອງຊອກຫາຂໍ້ມູນໃສ່ບອ່ນທີ່ບໍ່ໄດ້ໝາຍໃນຊ່ອງນີ້. ຖ້າຊ່ອງໃດຊ່ອງໜຶ່ງຂອງຄຳຖາມທີ 18 ແລະ 19 ໄດ້ໝາຍ (x) ຕົວຢ່າງ : 1 ເທົ່າກັບ(ເຄີຍ), 2 ບໍ່ເຄີຍ, 9 ບໍ່ມີຄຳຕອບ.

ຄຳຖາມ ທີ 19 : ເວລາທ່ານເກີດລູກຄົນທຳອິດ ອາຍຸຂອງທ່ານໄດ້ຈັກປີ.

ອາຍຸທີ່ນີ້ ໝາຍເຖິງອາຍຸເຕັມທີ່ຄິດໄລ່ຮອດວັນເກີດເທື່ອສຸດທ້າຍໃນເວລາເກີດລູກຄົນທຳອິດ ຕົວຢ່າງ : ນ. ໄມ, ເກີດວັນທີ 20 ເດືອນ 12 ປີ 1970 ແລະ ນ. ໄມ ໄດ້ເກີດລູກຄົນທຳອິດໃນວັນທີ 15 ເດືອນ 9 ປີ 1991, ສະນັ້ນ ອາຍຸຂອງ ນ.ໄມ ທີ່ເກີດລູກຄົນທຳອິດຈະແມ່ນ 20 ປີ (ເພາະການຄິດໄລ່ແມ່ນແຕ່ວັນທີ 20 ເດືອນ12 ປີ1970 ຫາ ວັນທີ 20 ເດືອນ 12 ປີ 1990). ຄຳຕອບໃນຄຳຖາມນີ້ຕ້ອງແມ່ນປີເຕັມດັ່ງນີ້: ອາຍຸຕົວຈິງແຕ່ 15 - 49 ປີ.

ກວດກາເບິ່ງວ່າອາຍຸສອດຄ່ອງກັບແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມຖ້າບໍ່ມີຄຳຕອບໃຫ້ພະຍາຍາມຊອກຄຳຕອບທີ່ຖືກຕ້ອງຈາກແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ. ຕ້ອງແນ່ໃຈວ່າຄຳຕອບທີ່ໃຊ້ສຳລັບທັງສອງຄຳຖາມໃນພາກນີ້ຕ້ອງສອດຄ່ອງກັບຄຳຕອບໃນຄຳຖາມທີ 2 ແລະ ທີ 4. ຕົວຢ່າງ: ຈຳນວນລູກເກີດມີຊີວິດຕ້ອງສອດຄ່ອງກັບອາຍຸປະຈຸບັນ ແລະ ອາຍຸຂອງແມ່ຍິງທີ່ເກີດລູກຜູ້ທຳອິດທີ່ມີຊີວິດ.

ຄຳຖາມ ທີ 20 : ຈຳນວນເດັກເກີດໃຫມ່ໃນ 12 ເດືອນຜ່ານມາ .

ກວດເບິ່ງວ່າຄຳຕອບມັນສອດຄ່ອງກັບແຫຼ່ງຂໍ້ມູນອື່ນໃນໃບແບບສອບຖາມ.ຫມາຍຄວາມວ່າໃຫ້ຈົດກ່າຍຈຳນວນທີ່ເກີດໃຫມ່ຫມາຍວ່າເດັກນ້ອຍອາຍຸຕ່ຳກ່ວາຫນຶ່ງປີລົງມາໃນນັ້ນແຍກ ຍິງ, ຊາຍ ຕາມລຳດັບ.

**ພາກ ສ : ການຕາຍໃນຄົວເຮືອນ.**

ພາກ ຈ:. ສຳລັບແມ່ຍິງ ອາຍຸ 15 - 49 ປີ.

- ອາຍຸຂອງແມ່ ແລະ ຈຳນວນລູກທີ່ເຄີຍເກີດມີຊີວິດ:

  ຈຳນວນລູກທີ່ເຄີຍເກີດມີຊີວິດນຳແມ່ຍິງຄົນໜຶ່ງ ຈະຕ້ອງສອດຄ່ອງກັບອາຍຸຂອງລາວ.ຕົວຢ່າງ: ແມ່ຍິງຄົນໜຶ່ງທີ່ມີອາຍຸ 25 ປີ ບໍ່ສາມາດເຄີຍເກີດລູກມີຊີວິດໄດ້ຈຳນວນ 10 ຄົນ, ຕໍ່ໆໄປ...

- ອາຍຸຂອງແມ່*, ລູກທີ່ເຄີຍເກີດມີຊີວິດແລະອາຍຸໃນເວລາເກີດລູກທຳອິດ:*

  ອາຍຸໃນເວລາເກີດລູກຄົນທຳອິດ,ຈຳນວນລູກທີ່ເຄີຍເກີດມີຊີວິດແລະອາຍຸຂອງແມ່ຈະຕ້ອງສອດຄ່ອງກັນ.ຕົວຢ່າງ:ແມ່ຍິງຄົນໜຶ່ງອາຍຸ 25 ປີ ແລະໃນເວລາເກີດລູກຄົນທຳອິດອາຍຸ18 ປີບໍ່ສາມາດມີລູກທີ່ເຄີຍເກີດມີຊີວິດໄດ້ ຈຳນວນ 10 ຄົນ.

- *ພາກທີ່ຄຳຖາມ ບໍ່ຖືກທີ່ຈະຖາມຜູ້ກ່ຽວ:*

  ຄຳຖາມໃນພາກ, ຄ, ງ ແລະ ພາກ ຈ ແມ່ນສຳລັບຖາມບາງບຸກຄົນ ທີ່ຕົກຖືກເງື່ອນໄຂຖາມ ແລະບາງບຸກຄົນທີ່ບໍ່ຕົກໃນເງື່ອນໄຂຖາມ. ໃຫ້ກວດກາເບິ່ງວ່ານັກເດີນສຳຫຼວດໄດ້ປະຕິບັດ

ຕາມຄຳແນະນຳຢ່າງຖືກຕ້ອງ; ນັ້ນຄືຄຳຖາມໃນພາກເຫຼົ່ານີ້ໄດ້ຖາມ ແຕ່ລະຄົນທີ່ຖືກເງື່ອນໄຂ ແລະ ໄດ້ຖາມຄົນທີ່ຖືກເງື່ອນໄຂໝົດທຸກຄົນແລ້ວຫຼືບໍ່.

- *ການນຳໃຊ້ລະຫັດເລກ9* '' ບໍ່ຮູ້ '' ທ່ານຕ້ອງກວດເບິ່ງວ່າຖ້ານັກເດີນສຳຫຼວດບໍ່ໃຊ້ລະຫັດດັ່ງກ່າວຫຼາຍປານໃດ. ໝາຍຄວາມວ່າ ເຂົາເຈົ້າຕ້ອງໄດ້ຮັບຄຳຕອບເກືອບຄົບຖ້ວນ.

ກ່ອນນັກເດີນສຳຫຼວດຂອງທ່ານຈະນຳວຽກກັບມາລາຍງານຕ້ອງໄດ້ຮັບການເຊັນຢັ້ງຢືນຈາກນາຍບ້ານກ່ອນ. ແຕ່ເຖິງຢ່າງໃດກໍ່ຕາມ, ອັນຈຳເປັນກ່ວາໝູ່ ຄືຕົວທ່ານເອງ ທີ່ເປັນນັກກວດກາກ່ອນຈະໄປຈາກເຂດກວດກາຂອງຕົນ ທ່ານຈະຕ້ອງຮັບປະກັນວ່າ ນັກເດີນສຳຫລວດໄດ້ປະຕິບັດໜ້າທີ່ສຳເລັດແລະໄດ້ເຄື່ອນຍ້າຍກັບຄືນມາຫາຫ້ອງ ການສຳຫຼວດພົນລະເມືອງຂັ້ນເມືອງ.

ຄືກັນກັບສ່ວນໜຶ່ງຂອງແຜນການການເດີນທາງຂອງທ່ານ, ນັກເດີນສຳຫຼວດກໍ່ຕ້ອງເຫັນພ້ອມກັບການໄປກວດກາຂອງທ່ານ. ໃນນັ້ນຄວນມີການກະກຽມໄວ້ລ່ວງໜ້າເວລາໃດທີ່ເຂົາເຈົ້າສາມາດກັບຈາກເຂດເດີນສຳຫຼວດ ໄດ້ມີຂໍ້ແນະນຳດັ່ງນີ້ກ່ຽວກັບການກະກຽມ:

- ບ່ອນໃດທີ່ນັກເດີນສຳຫຼວດຕິດຕໍ່ກັບທ່ານໄດ້ງ່າຍທີ່ສຸດ, ກ່ອນຈະກັບຈາກເຂດສຳຫຼວດ, ເຂົາເຈົ້າອາດຈະແຈ້ງໃຫ້ທ່ານ ແລະ ທ່ານກໍ່ຄວນກັບຖືກວັນເວລາທີ່ເຂົາເຈົ້າກັບຈາກເຂດສຳຫຼວດ.
- ບ່ອນໃດທີ່ນັກເດີນສຳຫຼວດຕິດຕໍ່ກັບທ່ານຫຍຸ້ງຍາກທ່ານຕ້ອງແຈ້ງວັນເວລາໃຫ້ເຂົາເຈົ້າກັບບໍ່ໃຫ້ກັບກ່ອນວັນເວລາທີ່ກຳນົດໄວ້ ຫຼັງຈາກນັ້ນ ຈຶ່ງເດີນທາງກັບມາຫາຫ້ອງການສຳຫລວດພົນລະເມືອງຂັ້ນເມືອງ.
- ຖ້າເປັນໄປໄດ້ໃຫ້ຝາກຈົດໝາຍບອກນັກເດີນສຳຫຼວດ
- ຖ້າຫາກວ່ານັກເດີນສຳຫຼວດບໍ່ສາມາດກັບຕົງມື້ກຳນົດອາດຊັກຊ້າ, ລາວຕ້ອງຕິດຕໍ່ແຈ້ງໃຫ້ທ່ານຊາບ ດ້ວຍວິທີທີ່ໄວທີ່ສຸດ.

ອີກເທື່ອໜຶ່ງນັກເດີນສຳຫຼວດໄດ້ຕິດຕໍ່ທ່ານແລ້ວ ( ຫຼືໄດ້ຕົກລົງຕາມມື້ກຳນົດ, ບໍ່ມີການຊັກຊ້າ) ທ່ານກໍ່ຕ້ອງໄປຫາຫ້ອງການຂັ້ນເມືອງ.ໃນການກັບໄປນັ້ນ ທ່ານຈະຕ້ອງແນ່ໃຈວ່າ.ນັກເດີນສຳຫຼວດຂອງທ່ານໄດ້ກັບໄປຖ້າຢູ່ເມືອງໝົດແລ້ວ. ຖ້າຫາກນັກເດີນສຳຫຼວດຄົນໃດຄົນໜຶ່ງຫາກຍັງບໍ່ເຫັນກັບມາ, ທ່ານກໍ່ຕ້ອງພະຍາຍາມຊອກຫາໃຫ້ເຫັນວ່າຍ້ອນຫຍັງ.

ອີກບັນຫາໜຶ່ງນັກເດີນສຳຫຼວດໝົດທຸກຄົນແມ່ນໄດ້ຂຶ້ນບັນຊີທ່ານຕ້ອງແນະນຳໃຫ້ພະນັກງານສຳຫຼວດພົນລະເມືອງຂັ້ນເມືອງ ກ່ຽວກັບການກວດກາຄຸນນະພາບຂອງວຽກ.

# 3. <u>ການກວດກາຄຸນນະພາບ</u>

## 3.1. ຈຸດປະສົງຂອງການກວດກາຄຸນນະພາບ

- ແນໃສ່ຮັບປະກັນໃຫ້ນັກກວດກາ ແລະ ນັກເດີນສຳຫລວດປະຕິບັດວຽກໃຫ້ໄດ້ຄຸນນະພາບສູງ.
- ການຄວບຄຸມຄຸນນະພາບແມ່ນມີຜົນດີໃຫ້ແກ່ການຕິດຕາມກວດການັກເດີນສຳຫລວດ.
- ກວດເບິ່ງຄຳຕອບທີ່ເກາະກ່າຍກັບແບບສອບຖາມ, ຕ້ອງຄົ້ນຫາຄຸນນະພາບທີ່ຍອມຮັບໄດ້.
- ມີວິທີການດັດແກ້ໂດຍອີງໃສ່ປຶ້ມຄູ່ມືເປັນຫລັກ ແລະ ເອົາໃຈໃສ່ນັກເດີນສຳຫລວດທີ່ຍັງອ່ອນຢູ່.

### 3.2 ການກວດກາຄຸນນະພາບຂອງການສຳພາດ

ຕິດຕາມນັກເດີນສຳຫລວດແຕ່ລະຄົນ (ໃນເຂດທີ່ທ່ານສາມາດໄປໄດ້ໃນຊ່ວງເວລາ 7 ວັນ ) ໃນເວລາເລີ້ມຕົ້ນ ການເດີນສຳຫລວດ ( ມື້ທຳອິດ ຫລື ມື້ທີສອງ ) ແລະສັງເກດເບິ່ງການສຳພາດ ຂອງແຕ່ລະຄົນ ຢ່າງໜ້ອຍສອງຄົວເຮືອນສຳລັບແຕ່ລະຄົນ. ເລີ້ມຕົ້ນດ້ວຍການສັງເກດການສຳພາດຂອງນັກເດີນສຳຫລວດ ທີ່ເຫັນວ່າອ່ອນກ່ວາໝູ່ໃນເວລາຝຶກອົບຮົມ. ນັກເດີນສຳຫລວດຄົນອື່ນສາມາດເລີ້ມການສຳພາດໄດ້ໂດຍ ບໍ່ຕ້ອງມີທ່ານໄປນຳກໍ່ໄດ້.ແຕ່ວ່າແນວໃດກໍ່ຕາມ,ຈະເລີ້ມຕິດຕາມເບິ່ງນັກສຳຫລວດຕັ້ງແຕ່ຄົນອ່ອນສຸດໄປຫາຄົນທີ່ແຂງສຸດ.

ບໍ່ໃຫ້ລົບກວນການສຳພາດເພາະມັນຈະເຮັດໃຫ້ນັກເດີນສຳຫລວດແລະຜູ້ຖືກສຳພາດບໍ່ພໍໃຈ.ໃນເວລາສັງເກດນັກເດີນສຳຫລວດ ສຳພາດຄົວເຮືອນໃດໜຶ່ງ ທ່ານຈະຕ້ອງນັ່ງໃນບ່ອນທີ່ທ່ານສາມາດເຫັນໄດ້ວ່າ ນັກເດີນສຳຫລວດໄດ້ຈົດກ່າຍຫຍັງແດ່ໃສ່ໃບສອບຖາມ. ໃຫ້ໝາຍຕີນກາໃສ່ໃນແບບຕາຕະລາງກວດຄຸນນະພາບຂອງນັກກວດກາທຸກຄັ້ງທີ່ນັກເດີນສຳຫລວດເຮັດຜິດ. ແບບຕາຕະລາງບັນຈຸມາດຖານສຳລັບແຕ່ຄວາມຜິດປະເພດຕ່າງໆໄດ້ສະແດງໃນຕາຕະລາງ1. ການເຮັດຜິດລວມມີທັງການຖາມຄຳຖາມບໍ່ຖືກ ແລະຈົດກ່າຍຄຳຕອບບໍ່ຖືກ. ຫລັງຈາກການສຳພາດແລ້ວໃຫ້ເບິ່ງແບບສອບຖາມຄືນ ແລະ ອະທິບາຍໃຫ້ນັກເດີນສຳຫລວດບ່ອນໃດທີ່ເຂົາເຈົ້າເຮັດຜິດ ແລະດັດແກ້ຄວາມຜິດນັ້ນຖ້າຈຳເປັນ. ອັນນີ້ຈະຕ້ອງເຮັດແບບແນບນຽນບໍ່ໃຫ້ໃຜໄດ້ຍິນນຳພວກທ່ານ. ເມື່ອດັດແປງແບບສອບຖາມແລ້ວໃຫ້ເຊັນຮັບວ່າຖືກຕ້ອງໃສ່ບ່ອນທີ່ ກຳນົດໃຫ້.

ຕາຕະລາງ 1 : ບັນຊີກວດກາຄຸນນະພາບການສຳພາດ

| ປະເພດການຄວບຄຸມຄຸນນະພາບ |
|---|
| 1. ພາກຂໍ້ມູນເອກະລັກໄດ້ຖືກຖາມແລະຈົດກ່າຍຖືກຕ້ອງບໍ່ |
| 2. ໄດ້ຖາມ / ຈົດກ່າຍພາກ: ຂ ສຳລັບສະມາຊິກທຸກຄົນໃນຄົວເຮືອນຢ່າງຖືກຕ້ອງແລ້ວບໍ່ (ໃຫ້ເອົາໃຈໃສ່ວ່າຄຳຖາມ 15 ແມ່ນສຳລັບຜູ້ມີອາຍຸ 10 ຂຶ້ນໄປ) |
| 3. ໄດ້ຖາມ/ຈົດກ່າຍພາກ: ຄ ຖືກຕ້ອງແລ້ວບໍ່ສຳລັບຄົນທີ່ມີອາຍຸ 6 ປີຂຶ້ນໄປ ແລະບໍ່ໄດ້ຖາມຄຳຖາມນີ້ສຳລັບ ຄົນທີ່ມີອາຍຸຕ່ຳກວ່າ 6 ປີ |
| 4. ໄດ້ຖາມ / ຈົດກ່າຍພາກ: ງ ຖືກຕ້ອງແລ້ວບໍ່ສຳລັບຄົນທີ່ມີອາຍຸ 10 ປີຂຶ້ນໄປ ແລະ ບໍ່ໄດ້ຖາມ ຄຳຖາມນີ້ ສຳລັບຄົນທີ່ມີອາຍຸຕ່ຳກວ່າ 10 ປີ |
| 5. ໄດ້ຖາມ/ຈົດກ່າຍພາກ: ຈ ຖືກຕ້ອງແລ້ວບໍ່ສຳລັບແມ່ຍິງທີ່ມີອາຍຸ 15 ຫາ 49 ປີໃຫ້ເອົາໃຈໃສ່ວ່າຖ້າຄຳຕອບໃນຄຳຖາມ 18 ແມ່ນ “ເຄີຍ” ທຸກຄຳຖາມຕໍ່ໄປໃນພາກ: ຈ ນີ້ຈະຕ້ອງມີຄຳຕອບຈົດກ່າຍໃສ່ |
| 6. ພາກ: ສ ແລະພາກ: ຊ ໄດ້ຖາມ ແລະ ຈົດກ່າຍຖືກຕ້ອງແລ້ວບໍ່,ສຳລັບຄົນຕາຍໃນ 12 ເດືອນຜ່ານມາ ແລະ ຍົກຍ້າຍໄປ,ຍົກຍ້າຍມາໃນ 12 ເດືອນຜ່ານມາ |
| 7. ພາກ:ຍ ໄດ້ຖາມ ແລະ ຈົດກ່າຍຖືກຕ້ອງແລ້ວບໍ່, ສຳລັບຄົນພິການໃນຄົວເຮືອນ |

| ປະເພດການຄວບຄຸມຄຸນນະພາບ |
| --- |
| 8. ພາກ:ດ ໄດ້ຖາມ ແລະ ຈົດກ່າຍຖືກຕ້ອງບໍ່,ສຳລັບຄຸນລັກສະນະຂອງຄົວເຮືອນຄົບຖ້ວນແລ້ວບໍ່ |
| 9. ໄດ້ຈົດກ່າຍຈຳນວນພົນລວມໃສ່ພາກ:ຕ ຖືກຕ້ອງແລ້ວບໍ່, ແລະ ຈົດກ່າຍຢູ່ໃນໃບສຸດທ້າຍຖ້າໃຊ້ຫລາຍກວ່າ 1 ໃບ |
| 10. ແບບສອບຖາມໄດ້ຖືກເຊັນຊື່ໃສ່ ແລະ ລົງວັນທີຢ່າງຖືກຕ້ອງແລ້ວບໍ. |
| 11.ໄດ້ມີການປະຕິບັດຕາມຂັ້ນຕອນຢ່າງຖືກຕ້ອງບໍ, ໃນເວລາກຳນົດທຸກຄົນຢູ່ປະຈຳໃນຄົວເຮືອນໃນເວລານັດ ໝາຍຂອງການສຳຫລວດພົນລະເມືອງ |
| 12. ມີການໝາຍເລກຄົວເຮືອນຖືກຕ້ອງບໍ |

❖ ການບອກຈຳນວນພົນລວມ ແລະເພດ, ໃຫ້ກວດກາເບິ່ງຄືນໃສ່ກັບຄຳຖາມພາກ ຂ ໃນຄຳຖາມທີ 1. ສະມາຊິກທັງຫມົດໃນຄົວເຮືອນ ກວດເບິ່ງ ທ້າວ ຫລື ນາງ ເພື່ອເບິ່ງເພດ.

ຖ້ານັກເດີນສຳຫລວດເຮັດຜິດພາດຫລາຍກ່ວາ 5 ຄຳຜິດ ຫຼື ເຮັດຜິດຄວາມຜິດເກົ່າຄືນອີກ, ທ່ານຈະຕ້ອງກັບຄືນມາສັງເກດເບິ່ງລາວໃໝ່ອີກພາຍຫລັງ. ຖ້າທ່ານຮູ້ສຶກວ່າມັນມີບັນຫາໜັກໜ່ວງສຳລັບນັກເດີນສຳຫລວດຄົນນັ້ນແລ້ວ, ໃຫ້ທ່ານຮີບລາຍງານຕໍ່ຫ້ອງການກອງເລຂາສຳຫລວດພົນລະເມືອງຂັ້ນເມືອງ ແລະ ປຶກສາຫາລືບັນຫາດັ່ງກ່າວນຳລາວ.

ໃນລະຫວ່າງທີ່ທ່ານກວດກາຄຸນນະພາບການສຳພາດຢູ່ນັ້ນ, ທ່ານກໍ່ຈະຕ້ອງໄດ້ກວດກາເບິ່ງຂອບເຂດສຳຫຼວດໄປນຳ. ທ່ານຈະຕ້ອງປະຕິບັດດັ່ງຕໍ່ໄປນີ້:

- ຈົດຊື່ຫົວໜ້າຄົວເຮືອນປະມານ 3 ຄົວເຮືອນທີ່ມີເຄື່ອງໝາຍ ນັກເດີນສຳຫລວດໄປສຳພາດໃຫ້ກວດເບິ່ງວ່າມີແບບສອບຖາມທີ່ໄດ້ຈົດກ່າຍສຳລັບຄົວເຮືອນເຫຼົ່ານີ້ແລ້ວຫຼືບໍ່.
- ເລືອກເອົາ 3 ຄົວເຮືອນໂດຍບັງເອີນ, ບໍ່ວ່າຄົວເຮືອນຫລັງນັ້ນຖືກສຳພາດແລ້ວຫຼືບໍ່ກໍ່ຕາມ,ໃຫ້ຈົດກ່າຍຊື່ສະມາຊິກຂອງແຕ່ລະຄົວເຮືອນ ( ຂອງ 3 ຄົວເຮືອນນັ້ນ ).
- ໃນການເຮັດແບບນີ້ ທ່ານຈະຕ້ອງໄດ້ອະທິບາຍໃຫ້ຄົວເຮືອນເຂົ້າໃຈ. ໃນເວລານັກເດີນສຳຫລວດສົ່ງແບບສອບຖາມທີ່ຈົດກ່າຍແລ້ວໃຫ້ທ່ານ, ທ່ານຈະຕອ້ງກວດແບບສອບຖາມຂອງຄົວເຮືອນທີ່ກົງກັບຄົວເຮືອນທີ່ທ່ານໄປຈົດກ່າຍມານັ້ນໃສ່ກັບບັນຊີຂອງທ່ານ. ຖ້າທ່ານ ພົບວ່າມີບັນຫາຈາກຜົນຂອງການກວດນີ້ ທ່ານຈະຕ້ອງບອກນັກເດີນສຳຫລວດໃຫ້ມີມາດຕະການແກ້ໄຂ ແລະ ທ່ານຈະຕ້ອງກວດກາຢ່າງລະອຽດຕື່ມອີກ.

## 3.3. ການກວດກາຄຸນນະພາບແບບສອບຖາມ

ການກວດກາແບບສອບຖາມໃນໄລຍະເດີນສຳຫລວດ ແມ່ນແນໃສ່ການປັບປຸງການສຳພາດໃຫ້ດີຂຶ້ນ. ການກວດການີ້ແມ່ນທ່ານຊຶ່ງໃນຖານະເປັນນັກກວດກາ, ນັກເດີນສຳຫລວດເປັນຜູ້ປະຕິບັດວຽກເດີນສຳຫລວດ.

ການກວດກາຫລັງສຳພາດແມ່ນແນໃສ່ການກວດກາຄຸນນະພາບ ທີ່ເຄັ່ງຄັດກ່ວາເກົ່າ  ແລະ ກ້າວໄປສູ່ການມີມາດຕະການແກ້ໄຂຄວາມຜິດພາດ.

ການກວດກາໃນໄລຍະການເດີນສຳຫລວດ ຈະເຮັດໃຫ້  ທ່ານມີໂອກາດດັດແປງຄວາມຜິດ ທີ່ນັກເດີນສຳຫລວດໄດ້ປະຕິບັດ ເພື່ອໃຫ້ການສຳພາດມີຄວາມຊັດເຈນຂຶ້ນກວ່າເກົ່າ. ຖ້າທ່ານພົບເຫັນຄວາມຜິດທີ່ທ່ານຈະຕ້ອງ  ຊຸກຍູ້ ໃຫ້ນັກເດີນສຳຫລວດເບິ່ງຄືນຄຳຖາມທີ່ຈົດກ່າຍແລ້ວ ແລະ ດ້ວຍການຊ່ວຍເຫຼືອຂອງທ່ານດັດແປງບ່ອນຜິດພາດ. ຖ້າບໍ່ສາມາດດັດແປງໄດ້, ຖ້າພໍກັບຄືນໄປຫາຄົວເຮືອນ,  ທ່ານຕ້ອງໃຫ້ນັກເດີນສຳຫລວດກັບຄືນໄປຫາຄົວເຮືອນອີກ.

ຖ້າທ່ານໄປເບິ່ງນັກເດີນສຳຫລວດທີ່ເລີ້ມປະຕິບັດວຽກກ່ອນແລ້ວ,  ທ່ານຈະສາມາດກວດກາບາງແບບສອບຖາມທີ່ຈົດກ່າຍສຳເລັດແລ້ວ.  ສຳລັບນັກເດີນສຳຫລວດທີ່ທ່ານເບິ່ງນຳເຂົາເຈົ້າແຕ່ຕົ້ນນັ້ນ, ທ່ານຈະໄດ້ກັບຄືນໄປກວດເບິ່ງບາງແບບສອບຖາມທີ່ຈົດກ່າຍແລ້ວກ່ອນໝູ່.  ທ່ານຈະຕ້ອງກວດກາແບບສອບຖາມ 5 ໃບຕໍ່ນັກເດີນສຳຫລວດຄົນໜຶ່ງ  ທ່ານຈະຕອ້ງເລືອກແບບສອບຖາມ  5  ໃບແບບບັງເອີນ.  ທ່ານຈະຕ້ອງບອກນັກເດີນສຳຫລວດວ່າໃຫ້ແຈ້ງທຸກບັນ ຫາທີ່ເຂົາເຈົ້າພົບໃຫ້ທ່ານຮູ້ .

ໃນເວລາກວດກາແບບສອບຖາມທີ່ຈົດກ່າຍແລ້ວສຳລັບຄົວເຮືອນໜຶ່ງ,  ທ່ານຈະຕ້ອງໝາຍຕົບກາໃສ່ *ແບບຕາຕະລາງກວດກາຄຸນນະພາບຂອງນັກກວດກາ*ສຳລັບແຕ່ລະຄວາມຜິດຕາມຕາຕະລາງ  2 ນີ້ . (ຈຳໄວ້ວ່າ,  ນັກເດີນສຳຫລວດຄົນໜຶ່ງຈະຕ້ອງໃຊ້ເກີນກ່ວາໜຶ່ງແບບຕາຕະລາງສຳລັບຄົວເຮືອນທີ່ມີຈຳນວນພົນເກີນກ່ວາ  10 ຄົນ ).

*ຕາຕະລາງ 2:* ບັນຊີກວດກາສຳລັບການກວດກາຄຸນນະພາບແບບສອບຖາມ

| ປະເພດການກວດກາຄຸນນະພາບ |
|---|
| 1. ພາກຂໍ້ມູນເອກະລັກໄດ້ຖືກຖາມແລະຈົດກ່າຍຖືກຕ້ອງບໍ່ |
| 2. ໄດ້ຖາມ/ຈົດກ່າຍພາກ: ຂ  ສຳລັບສະມາຊິກທຸກຄົນໃນຄົວເຮືອນຢ່າງຖືກຕ້ອງແລ້ວບໍ່( ໃຫ້ເອົາໃຈໃສ່ວ່າຄຳຖາມ  15 ແມ່ນສຳລັບຜູ້ທີ່ມີອາຍຸ 10 ປີຂຶ້ນໄປ ) |
| 3.ໄດ້ຖາມ/ຈົດກ່າຍພາກ: ຄ  ຖືກຕ້ອງແລ້ວບໍສຳລັບຄົນທີ່ມີອາຍຸ  6 ປີຂຶ້ນໄປ ແລະ ບໍ່ໄດ້ຖາມຄຳຖາມນີ້ສຳລັບຄົນທີ່ມີ ອາຍຸຕ່ຳກ່ວາ 6 ປີ. |
| 4. ໄດ້ຖາມ / ຈົດກ່າຍ ພາກ: ງ ຖືກຕ້ອງແລ້ວບໍ່ສຳລັບທຸກຄົນທີ່ມີອາຍຸ 10 ປີ ຂຶ້ນໄປແລະບໍ່ໄດ້ຖາມຄຳຖາມນີ້ສຳ ລັບຄົນທີ່ມີອາຍຸຕ່ຳກ່ວາ 10  ປີ |
| 5.ໄດ້ຖາມ/ ຈົດກ່າຍ ພາກ: ຈ ຖືກຕ້ອງແລ້ວບໍ່ສຳລັບແມ່ຍິງທີ່ມີອາຍຸ 15 ປີ ຫາ 49 ປີ ໃຫ້ເອົາໃຈໃສ່ ວ່າຄຳຕອບໃນຄຳຖາມ 18 ແມ່ນ “ ເຄີຍ “ ທຸກຄຳຖາມຕໍ່ໄປໃນພາກ : ຈ ນີ້ຈະຕ້ອງມີຄຳຕອບຈົດ ກ່າຍໃສ່. |
| 6.  ພາກ: ສ ແລະ ພາກ:ດ ໄດ້ຖາມແລະຈົດກ່າຍຖືກຕ້ອງແລ້ວບໍ່,ຢູ່ໃນແບບສອບຖາມສຳລັບແຕ່ລະຄົວເຮືອນ ( ໃນກໍລະນີມີຫລາຍກວ່າ 1 ໃບ ) |
| 7.  ໄດ້ຈົດກ່າຍຈຳນວນພົນລວມໃສ່ພາກ:ຕ     ຖືກຕ້ອງແລ້ວບໍ່,ແລະຈົດກ່າຍຢູ່ໃນໃບສຸດທ້າຍຖ້າໃຊ້ຫລາຍກວ່າ 1 ໃບ |
| 8. ແບບສອບຖາມໄດ້ຖືກເຊັນຊື່ໃສ່ ແລະ ລົງວັນທີຢ່າງຖືກຕ້ອງ ບໍ່ |

| ປະເພດການກວດກາຄຸນນະພາບ |
| --- |
| 9. ນັກເດີນສຳຫລວດໃຊ້ເລກ 9 " ບໍ່ຮູ້ " ຫລາຍໂພດ ( ອາດກຳນົດ - ບໍ່ໃຫ້ເກີນກ່ວາ 3 ຄຳຕອບມີລະຫັດ ບໍ່ຕອບ, "ບໍ່ຮູ້ " ຕໍ່ຄົນ ) |

ນັກກວດກາຜູ້ໜຶ່ງຄວນກວດກາ ແບບສອບຖາມ 5 ໃບຕໍ່ 1 ຫົວໂດຍການຄັດເລືອກແບບສຸ່ມເອົາ, ເພາະ ວ່າມັນມີຜົນໄດ້ຮັບທີ່ເປັນໄປໄດ້ 3 ຢ່າງ :

| |
| --- |
| ນັກເດີນສຳຫລວດຈົດກ່າຍຖືກຕ້ອງໝົດ , ບໍ່ມີຄວາມຜິດພາດຫຍັງບໍ ?. |
| ນັກເດີນສຳຫລວດມີອັດຕາການຜິດພາດ ຕ່ຳ ຫາ ປານກາງ. |
| ນັກເດີນສຳຫລວດມີອັດຕາຜິດຫລາຍໂພດ. |

ອັດຕາທີ່ຄວນຜິດພາດສູງສຸດນັ້ນແມ່ນບໍ່*ເກີນກ່ວາ 15 ຄວາມຜິດໃນແບບສອບຖາມ 5 ໃບ,* ຖ້າຫາກວ່ານັກ ເດີນສຳຫລວດມີອັດຕາການຜິດພາດຕ່ຳ ຫາ ປານກາງ , ທ່ານອາດແກ້ໄຂພອ້ມກັບນັກເດີນສຳຫລວດ.

ຖ້ານັກເດີນສຳຫລວດ ຫາກເຮັດມີຄວາມຜິດພາດໃນອັດຕາທີ່ສູງຕ້ອງດັດແກ້ພ້ອມນັກເດີນສຳຫລວດຢູ່ບ່ອນ ທີ່ສາມາດດັດແກ້ໄດ້.( ໃນເຂດທີ່ນັກເດີນສຳຫລວດກຳລັງປະຕິບັດງານຢູ່ )

ແບບສອບຖາມທັງໝົດທີ່ຜ່ານການກວດກາແລ້ວນັ້ນຖ້າທ່ານເຫັນວ່າຖືກຕ້ອງທ່ານກໍ່ລົງລາຍເຊັນໃສ່.

## 3.4. ການກວດກາຄຸນນະພາບຫລັງການເດີນສຳຫລວດ

ໃນໄລຍະເດີນສຳຫລວດທ່ານຄວນເອົາໃຈໃສ່ເປັນພິເສດເຖິງລະບົບການປະຕິບັດໃນທ້າຍອາທິດຂອງການສຳຫລວດ, ແລະເອົາໃຈໃສ່ຕໍ່ ນັກເດີນສຳຫລວດຄົນທີ່ອ່ອນທີ່ສຸດ ແລະ ບັນຫາຕ່າງໆພາຍໃນເຂດເດີນສຳຫລວດ. ໃນຕອນ ທ້າຍຂອງໄລຍະການເກັບກຳປື້ມແບບສອບຖາມ ຈະຕ້ອງຖືກສົ່ງຂຶ້ນມາຫ້ອງການກອງເລຂາສຳຫລວດພົນລະເມືອງຂັ້ນເມືອງ ຊຶ່ງຈະເປັນຜູ້ ແນະນຳໃຫ້ທ່ານ ກວດກາຜ່ານປື້ມແບບສອບຖາມທັງໝົດເຂດສຳຫລວດ. ມີຂໍ້ຜິດພາດໃດໆກໍ່ຕ້ອງແກ້ໄຂໃຫ້ຖືກຕ້ອງແຕ່ຂັ້ນຕອນເປັນການປັບປຸງຄຸນນະພາບຂອງຜົນໄດ້ຮັບຂັ້ນສຸດທ້າຍ.

*ການກວດກາບັນຊີຄົວເຮືອນ* :

ນັກກວດກາຄວນກວດກາເບິ່ງບັນຊີຄົວເຮືອນ ແລະ ເຂດສຳຫລວດທີ່ນັກເດີນ ສຳຫລວດຮັບຜິດຊອບຢູ່, ວ່າມີຄົວເຮືອນໃດໃນເຂດສຳຫລວດ ບໍ່ມີຢູ່ໃນບັນຊີ 01 ແລະຖືກຈົດຊ້ຳກັນຫລືມີຄົວເຮືອນເພີ້ມ

ຂັ້ນຕອນດັ່ງກ່າວນີ້ຮຽກຮ້ອງໃຫ້ກວດກາກວດນັບຄົວເຮືອນ ແລະຈຳນວນຄົນເພື່ອສົມທຽບໃສ່ບັນຊີຄົວເຮືອນທີ່ມີຢູ່ແລ້ວໃນຕາຕະລາງ 01. ນັກເດີນສຳຫລວດຕ້ອງມີບັນຊີ ຈຳນວນພົນລະເມືອງລວມຂອງຄົວເຮືອນທັງໝັດໃນໜ້າປົກຊຶ່ງເປັນຕົວເລກລວມຂອງປື້ມແບບສອບຖາມ.

ກວດເບິ່ງແບບສອບຖາມຄືນເພື່ອໃຫ້ແນ່ໃຈວ່າຈຳນວນລວມຖືກຕ້ອງແລ້ວ ແລະ ໄດ້ຈົດເຂົ້າໃນໃບສຸດທ້າຍຂອງແບບສອບຖາມສຳລັບໜຶ່ງຄົວເຮືອນ ແລະ ກວດເບິ່ງຕື່ມອີກວ່າຕົວເລກດັ່ງກ່າວດ້ຖືກກ່າຍອອກມາໃສ່ໜ້າປົກແລ້ວ. ຖ້າຫາກທ່ານໄດ້ຮັບຜົນຕອບແຕກຕ່າງກັນ, ກວດເບິ່ງຕົວເລກລວມອີກຄັ້ງໜຶ່ງຈົນກ່ວາຈະໄດ້ສອງຕົວເລກນັ້ນກົງກັນ.

ກ່າຍເອົາຕົວເລກລວມຂອງປຶ້ມແບບສອບຖາມ ແລະຄິດໄລ່ຜົນລວມສໍາລັບເຂດເດີນສໍາຫລວດ.ຈົດຜົນລວມ ທີ່ຖືກຕ້ອງໃນໜ້າປົກຂອງປຶ້ມແບບສອບຖາມ ແລະ ໃນແບບຕາຕະລາງຄວບຄຸມເຂດສໍາຫລວດ ຂອງນັກກວດ ກາ. ໃນເມື່ອທ່ານຈົດຜົນລວມຮອດປຶ້ມແບບສອບຖາມສຸດທ້າຍເຂົ້າ ໃນແບບຕາຕະລາງຄວບຄຸມເຂດສໍາຫລວດ ຂອງນັກກວດກາແລ້ວ, ຄິດໄລ່ຜົນລວມຂອງປຶ້ມແບບສອບຖາມທັງໝົດ ແລ້ວຈົດເຂົ້າແບບຕາຕະລາງ ຄວບຄຸມເຂດ ສໍາຫລວດຂອງນັກກວດກາ.

ຄິດໄລ່ເປັນ (%) ຄວາມແຕກຕ່າງລະຫ່ວາງຈໍານວນຕາມຂຶ້ນບັນຊີຄົວເຮືອນໃນຕາຕະລາງ 01. ເອົາຈໍານວນ ຄົວເຮືອນຕາມການສໍາຫລວດໃນເຂດສໍາຫລວດມາລົບໃຫ້ຈໍານວນຄົວເຮືອນໃນຕາຕະລາງ 01 ຫານຜົນໄດ້ຮັບໃຫ້ຈໍາ ນວນຄົວເຮືອນທີ່ໄດ້ຈາກການສໍາຫລວດ ແລ້ວຄູນກັບ100 ສໍາລັບຈໍານວນພົນກໍ່ເຮັດຄືກັນ.

ຕົວຢ່າງຕາຕະລາງ 3

ຕົວຢ່າງຂອງການກວດກາການຄວບຄຸມ

| | ເຂດສໍາຫລວດທີ່ 1 | | ເຂດສໍາຫລວດທີ່ 2 | |
|---|---|---|---|---|
| | ຈໍານວນພົນ | ຄົວເຮືອນ | ຈໍານວນພົນ | ຄົວເຮືອນ |
| ຈໍານວນລວມຕາມສໍາຫລວດ | 536 | 98 | 463 | 95 |
| ນັບຕາມການຂຶ້ນບັນຊີ 01 | 498 | 93 | 492 | 98 |
| ແຕກຕ່າງ | 38 | 5 | - 29 | -3 |
| ເປີເຊັນ | + 7.1 | + 5.1 | - 6.3 | - 3.2 |
| ສັງເກດ | ກວດຄືນ - ນັບເກີນ (ຈ/ນຄົວເຮືອນ). | | ກວດຄືນ - ນັບຂາດ ( ທັງຄົນແລະຄົວເຮືອນ ) | |

ມີສາມຄວາມສາມາດເປັນໄປໄດ້ໃນການກວດກາເຂດສໍາຫລວດ:1/. ນັບຂາດ, 2/. ນັບເກີນ ແລະ 3/. ຜົນອອກມາຍອມຮັບໄດ້.

ຜົນອອກມາເປັນການນັບຂາດຖ້າວ່າຜົນອອກມາສໍາລັບຄົວເຮືອນນ້ອຍກ່ວາ -2% ຫຼືຜົນອອກມາສໍາລັບຈໍານວນພົນນ້ອຍກ່ວາ - 5% ຫຼື ທັງສອງຢ່າງເປັນຈິງ ( ເຊື່ອຖືໄດ້ ).

ຜົນອອກມາເປັນການນັບເກີນຖ້າວ່າຜົນອອກມາສໍາລັບຄົວເຮືອນນ້ອຍກ່ວາ 5% ຫຼືຜົນອອກມາສໍາລັບຈໍານວນພົນໃຫ່ຍກ່ວາ 10% ຫຼື ທັງສອງຢ່າງເປັນຈິງ (ເຊື່ອຖືໄດ້). *ໝາຍເຫດ:*
ສາມາດເປັນໄປໄດ້ທີ່ໄດ້ຕົວເລກໜຶ່ງເປັນການນັບເກີນ ແລະອີກຕົວເລກອື່ນເປັນການນັບຂາດ. ຖືຄືກັນກັບການນັບຂາດ.

ຖ້າວ່າຜົນອອກມາມີທັງໜຶ່ງການນັບເກີນ ຫຼືໜຶ່ງການນັບຂາດ ໃນເວລານັ້ນເຂດສໍາຫລວດຕ້ອງຖືກຮັບເອົາ, ເຖິງວ່າ ຄ່າຂອງສອງຕົວເລກບໍ່ເທົ່າກັນ. ຕາຕະລາງ 4 ເປັນການ ສັງລວມຈຸດດັ່ງກ່າວມາຂ້າງເທິງ.

ຕາຕະລາງ 4

ການຄວບຄຸມສາມາດອອກມາເປັນດັ່ງນີ້

| ຕ້ອງປະຕິບັດດັ່ງນີ້ | ກວດກາລະອຽດ ສຳລັບການນັບຂາດ | ກວດກາລະອຽດ ສຳລັບການນັບເກີນ | ຮັບເອົາໄດ້ |
|---|---|---|---|
| | | ຖ້າວ່າບໍ່ມີການນັບເກີນທັງຈຳນວນພົນ ແລະທັງຄົວເຮືອນ | ຖ້າວ່າບໍ່ມີການນັບຂາດ. ນີ້ກໍ່ໝາຍຄວາມວ່າທັງສອງຢ່າງເປັນຈິງ |
| ເປີເຊັນຄວາມແຕກຕ່າງດ້ານຈຳນວນພົນ | ນ້ອຍກ່ວາ - 5 | ໃຫຍ່ກວ່າ 10 | ລະຫວ່າງ - 5 ແລະ + 10 |
| ເປີເຊັນຄວາມແຕກຕ່າງດ້ານຈຳນວນຄົວເຮືອນ | ນ້ອຍກວ່າ - 2 | ໃຫຍ່ກວ່າ 5 | ລະຫວ່າງ -2 ແລະ+5 |

## 3.5 ການກວດຄືນຢ່າງລະອຽດສຳລັບເຂດສຳຫລວດທີ່ຈຳນວນລວມບໍ່ກົງກັນ.

ບັນຫາສຳຄັນໃນການສຳຫລວດພົນລະເມືອງແມ່ນຕ້ອງໃຫ້ຂໍ້ມູນຊັດເຈນບໍ່ໃຫ້ມີການຈົດຂາດ ແລະຈົດເກີນ, ສະນັ້ນການຈົດຂາດໃນລະຫວ່າງການສຳຫລວດແມ່ນບັນຫາທຳມະດາທີ່ເກີດຂຶ້ນເລື້ອຍໆ ແລະ ເປັນບັນຫາຮ້າຍແຮງກວ່າການຈົດເກີນເພາະການຈົດເກີນອາດແມ່ນຍ້ອນນັກເດີນສຳຫລວດເຮັດວຽກລະອຽດກ່ອນການຂື້ນ ບັນຊີຄົວເຮືອນ.

ຖ້າມີກໍລະນີຈົດຂາດ ( ຫຼືຈົດເກີນຢູ່ໃນການຂຶ້ນບັນຊີຄົວເຮືອນຕາຕະລາງ 01 ) ທ່ານຈະຕ້ອງໃຊ້ບັນຊີຄົວເຮືອນດັ່ງກ່າວເພື່ອກວດເບິ່ງວ່ານັກເດີນສຳຫລວດບໍ່ໄດ້ສຳຫລວດຄົວເຮືອນໃດ. ໃຫ້ເບິ່ງຢ່າງລະອຽດຕາມບັນຊີ 01 ແລະ ໃຫ້ໝາຍໃສ່ແຕ່ລະຄົວເຮືອນທີ່ພົບເຫັນວ່າຢູ່ໃນປຶ້ມແບບສອບຖາມ, ໃນເວລາດຽວກັນນັ້ນກໍ່ໝາຍຕິກ(✓) ໃສ່ແບບສອບຖາມຢູ່ບ່ອນສຳລັບໃຫ້ພະນັກງານເຊັນຊື່. ໃນຄົວເຮືອນໃດທີ່ຈຳນວນຄົນຕ່າງກັນໃຫ້ໝາຍຕົວຫນັງສື "ຕ" ໃສ່ຢູ່ຕໍ່ໜ້າຈຳນວນພົນໃນບັນຊີ 01 ທ່ານອາດຈະພົບຄົວເຮືອນທີ່ບໍ່ມີຢູ່ໃນບັນຊີໃດ ຫຼືບັນຊີໜຶ່ງ.

ບາດກ້າວຕໍ່ໄປແມ່ນໃຫ້ເບິ່ງວ່ານັກເດີນສຳຫລວດໄດ້ຂຽນຂ່າວສານຫຍັງໄວ້ໃຫ້ບໍ ທີ່ສາມາດອະທິບາຍຄົວເຮືອນທີ່ຂາດໄປ ຍ້ອນການຍົກຍ້າຍໄປຢູ່ບ່ອນອື່ນ ແລະ ອະທິບາຍຄວາມແຕກຕ່າງໃນຈຳນວນຄົນ.ຫລື ມີຄົວເຮືອນມາເພີ້ມເຕີມຢູ່ໃນເຂດສຳຫລວດຂອງຕົນ.

ທ່ານຈະຕ້ອງໄດ້ສັງເກດອີກວ່າການເກີດ ແລະ ການຕາຍທີ່ເກີດຂຶ້ນໃນຄົວເຮືອນສາມາດອະທິບາຍຄວາມແຕກຕ່າງໃຫ້ຈຳນວນຄົນໄດ້. ຖ້າທ່ານພໍໃຈວ່າທຸກຄົນໃນຄົວເຮືອນໃນບັນຊີໄດ້ຖືກສຳຫລວດ ຫຼື ໄດ້ກ່າວເຖິງຢູ່ໃນຄຳເຫັນຂອງນັກເດີນສຳຫລວດໃຫ້ຄິດໄລ່ຄືນຈຳນວນລວມ ໃນບັນຊີ 01 ໂດຍການປັບຄວາມແຕກຕ່າງກັນ.

ຖ້າຜົນໄດ້ຮັບແມ່ນຢູ່ໃນຂອບເຂດທີ່ຍອມຮັບໄດ້ໃຫ້ເຊັນຮັບເອົາ ເຂດເດີນສຳຫລວດນັ້ນຢູ່ໃນແບບຕາຕະລາງຄຸ້ມຄອງເຂດເດີນສຳຫລວດຂອງພະນັກງານກວດກາ, ຖ້າບໍ່ດັ່ງນັ້ນທ່ານຈະຕ້ອງມີມາດຕະການເພື່ອແກ້ໄຂຂໍ້ ແຕກຕ່າງນີ້.    ຖ້າເຫັນວ່າມີຄົວເຮືອນໃດໃນບັນຊີ 01  ບໍ່ຖືກສຳຫຼວດທ່ານຕ້ອງກວດກາຄືນອີກເທື່ອໜຶ່ງ ,ຫຼືຢູ່ໃນເຂດສຳຫລວດຂອງ ທ່ານ ອາດມີທັງຄົວເຮືອນທີ່ບໍ່ມີລາຍຊື່ໃນຕາຕະລາງ 01 ໃຫ້ທ່ານຈົດເຂົ້າລຳດັບຕໍ່ໄປ ຂອງບັນຊີ 01 ໂດຍສົມທົບກັບອຳນາດການປົກຄອງບ້ານ

**ໃນກໍລະນີບັນຫາທີ່ສາມາດເກີດຂຶ້ນມີດັ່ງນີ້:**

- ນັກເດີນສຳຫລວດໄປຈົດນັບເອົາຄົວເຮືອນຊຶ່ງຄົວເຮືອນດັ່ງກ່າວໄດ້ຖືກສຳຫລວດຢູ່ເຂດອື່ນແລ້ວ.
- ນັກເດີນສຳຫລວດຕົວະ, ຂຽນໃບສອບຖາມໃຫ້ສຳເລັດໂດຍບໍ່ໄດ້ປະຕິບັດການສຳພາດເລີຍເປົ້າໝາຍຕົ້ນຕໍ ທ່ານແມ່ນການກວດກາເບິ່ງບັນຫາສຳຄັນເຊັ່ນ :   ຄວາມແຕກຕ່າງຫລາຍໂພດລະຫວ່າງສອງບັນຊີ. ຖ້າມີບັນຫາຫລາຍກໍ່ຕ້ອງລາຍງານໃຫ້ກອງເລຂາຂັ້ນເມືອງໂດຍດ່ວນ.

# 4.ການເຄື່ອນໄຫວຫລັງການເດີນສຳຫລວດ

## 4.1.ຫຼັງການສຳຫລວດ.

ໃນເມື່ອການສຳຫລວດສິ້ນສຸດລົງໃນເຂດກວດກາຂອງທ່ານ,  ນັກເດີນສຳຫລວດແຕ່ລະເຂດສຳຫລວດຕ້ອງນຳເອກະສານມາສົ່ງໃຫ້ທ່ານຍິ່ງໄວເທົ່າໃດຍິ່ງດີ. ທ່ານຕ້ອງຕິກໝາຍ (x)ໃນບັນຊີກວດກາຂອງທ່ານສຳລັບ

| ແບບຕາຕະລາງກວດກາຄຸນນະພາບຂອງນັກກວດກາ ການສຳຫຼວດພົນລະເມືອງທົ່ວປະເທດຄັ້ງທີ່ 3 ປີ 2005. | 1. ແຂວງ | | | | ລະຫັດ | | | | |
|---|---|---|---|---|---|---|---|---|---|
| | 2. ເມືອງ | | | | ລະຫັດ | | | | |
| | 3. ບ້ານ | | | | ລະຫັດ | | | | |
| | 4. ນັກເດີນສຳຫລວດ | | | | ຕາຕະລາງທີ່: | ເຂດສ/ຫລ | | | |
| | | | ຊື່ | | ວັນທີ່ | ລາຍເຊັນ | | | |
| | 5. ນັກກວດກາ | | | | | | | | |
| | 6. ພ/ງ ເມືອງ | | | | | | | | |
| ຜົນຂອງການສັງເກດການສຳພາດ/ ການເບິ່ງແບບສອບຖາມ. ໝາຍໄຂ່ວຕົບກາໃສ່ຫ້ອງທີ່ຜິດພາດ | ຈຳນວນເທື່ອການ ສັງເກດການສຳພາດ | | | | ຈຳນວນໃບແບບສອບຖາມ ທີ່ໄດ້ກວດເບິ່ງຄືນ | | | | |
| | 1 | 2 | 3 | 4 | 1 | 2 | 3 | 4 | 5 |
| 1. ຂໍ້ມູນເອກະລັກຖືກຖາມບໍ່/ ຈົດຖືກຕ້ອງບໍ່ | | | | | | | | | |
| 2.ພາກ ຂຖືກຖາມບໍ່/ຈົດກ່າຍຖືກຕ້ອງສຳລັບໝົດທຸກຄົນໃນຄົວເຮືອນບໍ່(ໝາຍເຫດ:ຄຳຖາມ 15 ສະເພາະຜູ້ທີ່ມີອາຍຸເກີນ 10 ປີ ຂຶ້ນໄປ. | | | | | | | | | |
| 3.ພາກ:ຄ ຖືກຖາມແລະຈົດກ່າຍຖືກຕ້ອງບໍ່ສຳລັບໝົດທຸກຄົນອາຍຸ     6 ປີຂຶ້ນໄປ, ບໍ່ມີໃຜຫຼຸດ 6 ປີບໍ່ | | | | | | | | | |
| 4. .ພາກ:ງ ຖືກຖາມແລະຈົດກ່າຍຖືກຕ້ອງບໍ່ສຳລັບຜູ້ທີ່ມີອາຍຸ 10 ປີຂຶ້ນໄປ. | | | | | | | | | |
| 5.ພາກ:ຈ ຖືກຖາມແລະຈົດກ່າຍຖືກຕ້ອງບໍ່ສຳລັບແມ່ຍິງອາຍຸ15-49ປີ | | | | | | | | | |
| 6.ພາກ:ສແລະພາກ:ຊໄດ້ຖາມແລະຈົດກ່າຍຖືກຕ້ອງແລ້ວບໍ່, ສຳລັບຄົນ ຕາຍໃນ 12 ເດືອນຜ່ານມາ ແລະຍົກຍ້າຍໄປ,ຍົກຍ້າຍມາໃນ 12 ເດືອນຜ່ານມາ | | | | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| 7. ພາກ: ຍ ໄດ້ຖາມ ແລະ ຈົດກ່າຍຖືກຕ້ອງແລ້ວບໍ່, ສຳລັບຄົນພິການ ໃນຄົວເຮືອນ | | | | | | | | | |
| 8. ພາກ:ດ ໄດ້ຖາມ ແລະ ຈົດກ່າຍຖືກຕ້ອງບໍ່, ສຳລັບຄຸນລັກສະນະຂອງ ຄົວເຮືອນຄົບຖ້ວນແລ້ວບ | | | | | | | | | |
| 9.ໄດ້ມີຈຳນວນລວມພາກ: ຓ ແລ້ວບໍ່ຖືກຕ້ອງ ບໍ່ຢູ່ໃນ ໃບສຸດທ້າຍຂອງແບບສອບຖາມ | | | | | | | | | |
| 10. ໃນແບບສອບຖາມໄດ້ເຊັນຊື່ ແລະ ວັນທີ່ຖືກຕ້ອງບໍ່. | | | | | | | | | |
| 11. ຂັ້ນຕອນຕ່າງໆໃນການເດີນສຳຫລວດໄດ້ປະຕິບັດ ຖືເອົາເວລາ ນັດໝາຍບໍ່ | | | | | ///// | ///// | ///// | ///// | ///// |
| 12. ການໝາຍເລກຄົວເຮືອນຖືກຕ້ອງແລ້ວບໍ່ | | | | | ///// | ///// | ///// | ///// | ///// |
| 13.ການຈົດນັບຢູ່ໃນແບບສອບຖາມໄດ້ຖືກຈົດມາໃສ່ໜ້າປົກປື້ມແບບ ສອບຖາມຖືກຕ້ອງບໍ່ | ///// | ///// | ///// | ///// | | | | | |
| ຈຳນວນຜິດພາດທັງໝົດ | | | | | | | | | |
| ການສັງເກດຕີລາຄາ | | | | | | | | | |

ການຮັບເອົາເອກະສານຈາກນັກເດີນສຳຫລວດ. ວຽກໜຶ່ງເປັນວຽກທີ່ສຳຄັນເປັນພິເສດແມ່ນການຮັບແບບສອບຖາມທັງໝົດຈາກນັກເດີນສຳຫລວດໃຫ້,ນັບເອົາທັງປື້ມແບບສອບຖາມທີ່ໄດ້ໃຊ້ ແລະຍັງບໍ່ທັນໄດ້ໃຊ້ຄືນຕາມຈຳນວນເດີມ.

- ປື້ມແບບສອບຖາມທັງໝົດຍັງຄົງຢູ່ສະພາບເດີມບໍ່ມີໃບໃດຖືກຈີກອອກ
- ຈຳນວນປື້ມແບບສອບຖາມທັງໝົດກັບມາຕ້ອງກົງກັບຈຳນວນປື້ມແບບສອບຖາມທີ່ໄດ້ໃຫ້ນັກເດີນສຳຫລວດໄປໃນ ໄລຍະການເດີນສຳຫລວດ.
- ປື້ມແບບສອບຖາມແຕ່ລະຫົວຕ້ອງຍັງບັນຈຸແບບສອບຖາມຄືເກົ່າ ແລະ ຮັກສາໃຫ້ສະອາດໝາຍຄວາມວ່າບໍ່ມີແບບສອບຖາມໃບໃດຖືກເຄື່ອນຍ້າຍອອກຈາກປື້ມແບບສອບຖາມ.

- ກ່ອນເລີ້ມການກວດກາໃບສອບຖາມຄວນກວດເບິ່ງຄຳເຫັນທີ່ມີຢູ່ໜ້າປົກຂອງປື້ມແບບສອບຖາມ, ອາດມີບາງຄຳເຫັນທີ່ເປັນປະໂຫຍດສຳລັບວຽກດັດແກ້ຂອງທ່ານ.ພ້ອມກັນນັ້ນຄວນຈື່ການກວດບ່ອນໝາຍເຫດໃນແຕ່ລະໃບແບບສອບຖາມກ່ອນຈະເລີ້ມດັດແກ້ຄວາມຜິດ.ບາງຄັ້ງຄາວປື້ມບັນທຶກປະຈຳວັນຂອງນັກເດີນສຳ ຫລວດຈະເປັນແຫລ່ງຂ່າວສານສຳລັບການດັດແກ້ຄຳຜິດ.

ລະຫັດກ່ຽວກັບການສຳພາດ:

ຮ = ຮັບໄດ້ ກ = ກວດຄືນອີກ ຖ = ຖາມຫົວໜ້າຂອງທ່ານ

ລະຫັດກ່ຽວກັບແບບສອບຖາມ:

ຮບ = ຮັບໄດ້ໂດຍບໍ່ໄດ້ດັດແປງ ຮດ = ຮັບໄດ້ແຕ່ໄດ້ດັດແປງ ກ = ກວດຄືນອີກ ຖ = ຖາມຫົວໜ້າຂອງທ່ານ

| ແບບຕາຕະລາງຄວບຄຸມເຂດສຳຫລວດຂອງນັກກວດກາ<br>ການສຳຫລວດພົນລະເມືອງທົ່ວປະເທດ 2005 | | | | | 1. ແຂວງ | | | | | | ລະຫັດ | |
|---|---|---|---|---|---|---|---|---|---|---|---|---|
| | | | | | 2. ເມືອງ | | | | | | ລະຫັດ | |
| | | | | | 3. ບ້ານ | | | | | | ລະຫັດ | |
| | | | | | | | ຊື່ | | ວັນທີ | | ລາຍເຊັນ | |
| | | | | | 4. ນັກກວດກາ | | | | | | | |
| | | | | | 5. ເມືອງ | | | | | | | |
| | | | | | 6. ພ ໆ ສ/ມ ເມືອງ | | | | | | | |
| 7. ເຂດສຳຫລວດທີ່ | ກ. | | ຂ. | | ຄ. | | ງ. | | ຈ. | | ຄ. | |
| | ຄົວເຮືອນ | ຈ/ນ ພົນ | ຄົວເຮືອນ | ຈ/ນ ພົນ | ຄົວເຮືອນ | ຈ/ນ ພົນ | ຄົວເຮືອນ | ຈ/ນ ພົນ | ຄົວເຮືອນ | ຈ/ນ ພົນ | ຄົວເຮືອນ | ຈ/ນ ພົນ |
| 8. ປຶ້ມແບບສອບຖາມ 1 | | | | | | | | | | | | |
| 9. ປຶ້ມແບບສອບຖາມ 2 | | | | | | | | | | | | |
| 10. ປຶ້ມແບບສອບ ຖາມ 3 | | | | | | | | | | | | |
| 11. ປຶ້ມແບບສອບ ຖາມ 4 | | | | | | | | | | | | |
| 12. ປຶ້ມແບບສອບ ຖາມ 5 | | | | | | | | | | | | |
| 13. ປຶ້ມແບບສອບ ຖາມ 6 | | | | | | | | | | | | |
| 14. ປຶ້ມແບບສອບ ຖາມ 7 | | | | | | | | | | | | |
| 15.ລວມໝົດເຂດສຳ ຫລວດ | | | | | | | | | | | | |
| 16.ລວມຕາມແຜນວາດ | | | | | | | | | | | | |
| 17.ແຕກຕ່າງ | | | | | | | | | | | | |
| 18.ເປີເຊັນ | | | | | | | | | | | | |
| 19.ຂໍ້ສັງເກດ | | | | | | | | | | | | |
| 20.ຜົນລວມສຸດທ້າຍ | | | | | | | | | | | | |
| 21.ຜົນລວມສຸດທ້າຍ | | | | | | | | | | | | |

ລະຫັດສຳລັບການຕັດ ສິນໃຈ

ຮ = ຮັບໄດ້, ຫຼ = ຫຼານກ່ວາຈຳນວນໃນບັນຊີຄົວເຮືອນ; ນ = ນ້ອຍກ່ວາຈຳນວນໃນຄົວເຮືອນ;

ປ = ປົນກັນ